**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

# (ຮ່າງ)

# ບົດລາຍງານຫຍໍ້

## ການກວດກາປະເມີນຄວາມທຸກຍາກ ແລະການພັດທະນາ ຕາມດຳລັດ 285/ນຍ

### ພາກທີໜຶ່ງ

### ສະຫຼຸບຕີລາຄາການຈັດຕັ້ງປະຕິບັດແລະລາຍງານຜົນຂອງການກວດກາປະເມີນ

### I. ຄວາມເປັນມາຂອງດຳລັດເລກທີ285/ນຍວ່າດ້ວຍມາດຕະຖານຄວາມທຸກຍາກແລະມາດຕະຖານ ພັດທະນາໄລຍະ 2011-2015, ແລະການກວດກາປະເມີນ.

ນັບຕັ້ງແຕ່ມີຄຳສັ່ງເລກທີ 09/ກມສພ ກ່ຽວກັບການສ້າງບ້ານແລະກຸ່ມບ້ານພັດທະນາ, ຄຳສັ່ງແນະນຳເລກທີ 10/ນຍ ຂອງນາຍົກລັດຖະມົນຕີ ວ່າດ້ວຍການສ້າງແຜນງານລົບລ້າງຄວາມທຸກຍາກ ກໍ່ຄືຄຳສັ່ງເພີ່ມເຕີມເລກທີ 13/ນຍ ກ່ຽວກັບການສ້າງບ້ານແລະກຸ່ມບ້ານພັດທະນາເປັນຕົ້ນມາ, ຢູ່ປະເທດເຮົາໄດ້ມີການສຳຫຼວດຫຼາຍຄັ້ງເພື່ອປະເມີນຂໍ້ມູນຄວາມທຸກຍາກ; ບັນດາຂະແໜງການກໍ່ລ້ວນແຕ່ໄດ້ເກັບກຳຂໍ້ມູນຄວາມທຸກຍາກຂາດເຂີນ ຕາມຂະແໜງການຂອງໃຜລາວ. ອັນທີ່ເດັ່ນແມ່ນ ຂະບວນການ**ສ້າງຄອບຄົວ-ບ້ານນາມະຍົດ** [i] ໃນຂະແໜງການຕ່າງໆ ແລະ**ການສຳຫຼວດການຊົມໃຊ້ ແລະ ການໃຊ້ຈ່າຍຂອງຄົວເຮືອນ (LECS[ii])** ເພື່ອເກັບກຳຂໍ້ມູນເສດຖະກິດສັງຄົມ ແລະ ສະຫຼຸບຕົວເລກຄວາມທຸກຍາກຮັບໃຊ້ເປົ້າໝາຍສະຫັດສະວັດ ແຫ່ງ ການພັດທະນາ.

ຄຽງຄູ່ກັບບັນດາຂໍ້ມູນດ້ານເສດຖະກິດສັງຄົມຕ່າງໆນັ້ນ ພວກເຮົາຍັງຕ້ອງການຂໍ້ມູນ ບັນຊີຄອບຄົວ, ບ້ານທີ່ຍັງທຸກຍາກ ແລະຍັງທຸກດ້ານໃດແດ່ ຕາມທິດທາງຂອງແຜນພັດທະນາເສດຖະກິດສັງຄົມຫ້າປີຄັ້ງທີ VII ທີ່ໄດ້ຖືເອົາເປົ້າໝາຍແກ້ໄຂຄວາມທຸກຍາກ; ຍິ່ງໄປກ່ວາ ແມ່ນຂໍ້ມູນ ການສ້າງບ້ານພັດທະນາ ຕາມ 4 ເນື້ອໃນ 4 ຄາດໝາຍ ຕາມທິດນຳຂອງຄຳສັ່ງເລກທີ 13/ນຍ ທີ່ວ່າ *"ໝາກຜົນສຸດທ້າຍ ທີ່ຍືນຍົງຜົນໄດ້ຮັບຂອງການລົງກໍ່ສ້າງຮາກຖານການເມືອງ, ສ້າງບ້ານແລະກຸ່ມບ້ານພັດທະນາແມ່ນ ບ້ານພັດທະນາ".*

ດ້ວຍເຫດຜົນດັ່ງກ່າວຂ້າງເທິງນັ້ນ, ໂດຍປະຕິບັດຕາມທິດນຳທີ່ກຳນົດໄວ້ໃນມະຕິກອງປະຊຸມໃຫຍ່ຄັ້ງທີ VIII ຂອງພັກທີ່ວ່າ ໃຫ້ *"ລວມເອົາກິດຈະກຳ ແລະໂຄງການຕ່າງໆທີ່ກ່ຽວຂ້ອງກັບ*

*ການພັດທະນາຊົນນະບົດ ເຂົ້າເປັນກິດຈະກຳລວມຂອງການສ້າງບ້ານພັດທະນາ"* ຈຶ່ງໄດ້ ມີດຳລັດ ເລກທີ 285/ນຍ ວ່າດ້ວຍມາດຕະຖານຄວາມທຸກຍາກ ແລະມາດຕະຖານພັດທະນາໄລຍະ 2011-2015 ອອກມາ, ຊຶ່ງໄດ້ສັງລວມເອົາບັນດາມາດຕະຖານດ້ານຕ່າງໆຕາມຂະແໜງການຊຶ່ງບໍ່ພຽງແຕ່ດ້ານເສດຖະກິດສັງຄົມເທົ່ານັ້ນ ຍັງມີດ້ານການເມືອງແນວຄິດຂອງປະຊາຊົນ, ຄວາມເຂັ້ມແຂງຂອງລະບົບການເມືອງ ແລະວຽກງານ ປກສ - ປກຊ ຂອງຮາກຖານ ເຂົ້າເປັນມາດຕະຖານພັດທະນາລະອຽດ ສຳລັບຄອບຄົວ, ບ້ານ, ແລະກຸ່ມບ້ານ ໃຫ້ງ່າຍໃນການຈັດຕັ້ງປະຕິບັດເປັນເອກະພາບໃນທົ່ວປະເທດ.

ດຳລັດເລກທີ 285/ນຍ ຈຶ່ງແມ່ນເອກະສານນິຕິກຳ ທີ່ທົບທວນ ປັບປຸງ ແລະຜັນຂະຫຍາຍ ຄຳສັ່ງເລກທີ 09/ກມສພ, ຄຳສັ່ງເລກທີ 10/ນຍ, ຄຳສັ່ງເລກທີ 13/ນຍ ກ່ຽວກັບການສ້າງບ້ານ ແລະກຸ່ມບ້ານພັດທະນາ ຊຶ່ງເນື້ອແທ້ແມ່ນ *"ມາດຕະການຍຸດທະສາດ, ພື້ນຖານ, ຍາວນານ ຂອງການສືບຕໍ່ກໍ່ສ້າງ ແລະບຸລະນະລະບອບປະຊາທິປະໄຕປະຊາຊົນຕາມຈຸດໝາຍສັງຄົມນິຍົມ ໂດຍຮັບປະກັນໃຫ້ຖືກຕາມ 4 ເນື້ອໃນແລະ 4ຄາດໝາຍ".*

ດຳລັດເລກທີ 285/ນຍ ເປັນເຄື່ອງມືດ້ານນິຕິກຳ ໃນການສ້າງຂໍ້ມູນຕົວຈິງໃໝ່ໆ ຄື ຈຳນວນ -ລາຍຊື່ ຄອບຄົວ ແລະບ້ານທີ່ທຸກຍາກ ພ້ອມທັງລາຍລະອຽດວ່າຍັງທຸກຍາກດ້ານໃດ ຈຳນວນ -ລາຍຊື່ຄອບຄົວ, ບ້ານທີ່ຍັງບໍ່ທັນພັດທະນາ ແລະຍັງບໍ່ທັນພັດທະນາດ້ານໃດແດ່ ຕາມ 4 ເນື້ອໃນ 4 ຄາດໝາຍ.

ນັບແຕ່ມື້ທີ່ດຳລັດມີຜົນບັງຄັບໃຊ້ເປັນຕົ້ນມາ, ຄພທຊ ກໍ່ຄືກະຊວງແຜນການແລະການລົງທຶນໄດ້ຊີ້ນຳໃຫ້ນະຄອນຫຼວງ-ບັນດາແຂວງຈັດຕັ້ງປະຕິບັດ, ແຕ່ກໍ່ຍັງປະຕິບັດ ບໍ່ທັນເປັນເອກະພາບກັນໃນຂອບເຂດທົ່ວປະເທດເທື່ອ. ນອກຈາກນັ້ນ ກໍ່ໄດ້ເຄີຍມີຄວາມພະຍາຍາມທີ່ຈະກວດກາປະເມີນດຳລັດດັ່ງກ່າວ ໂດຍເອົາເຂົ້າເປັນສ່ວນໜຶ່ງຂອງການສຳຫຼວດສະຖິຕິກະສິກຳທົ່ວປະເທດ[iii], ແຕ່ເນື່ອງຈາກມາດຕະຖານ,ວິທີດຳເນີນແລະຈຸດປະສົງແຕກຕ່າງກັນ,ຈຶ່ງບໍ່ສາມາດດຳເນີນຮ່ວມກັນໄດ້.

ຍ້ອນແນວນັ້ນ, ຈຶ່ງມີຄວາມຈຳເປັນ ອັນຮີບດ່ວນ ພາວະວິໄສ[iv] ທີ່ຈະຕ້ອງໄດ້ດຳເນີນການກວດກາປະເມີນ ເອົາ **ຂໍ້ມູນຕົວຕັ້ງ** ຕາມຄຳສັ່ງເລກທີ 18/ນຍ ວ່າດ້ວຍການອະນຸມັດ ການກວດກາປະເມີນ ຄວາມທຸກຍາກ ແລະການພັດທະນາຕາມດຳລັດ ເລກທີ 285/ນຍ,

## II. ຈຸດປະສົງ ແລະວິທີການຂອງການກວດກາປະເມີນ

### 2.1.ຈຸດປະສົງ

ຈຸດປະສົງພື້ນຖານສຸດທ້າຍຂອງການກວດກາປະເມີນດຳລັດ 285/ນຍ ບໍ່ແມ່ນ ເພື່ອເກັບກຳສະຖິຕິຄວາມທຸກຍາກຊຶ່ງແມ່ນດ້ານເສດຖະກິດສັງຄົມ ແຕ່ແມ່ນເພື່ອຕີລາຄາສະພາບຄວາມເປັນຈິງ ແລະສ້າງຂໍ້ມູນຕົວຕັ້ງ[v] ຂອງການສ້າງບ້ານ ແລະກຸ່ມບ້ານພັດທະນາຕາມ 4 ເນື້ອໃນ 4 ຄາດໝາຍ

ຊຶ່ງເປັນການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ VIII ຂອງພັກ, ຄຳສັ່ງເລກທີ 09/ກມສພ, ຄຳສັ່ງເລກທີ 10/ນຍ, ຄຳສັ່ງເພີ່ມເຕີມເລກທີ 13/ນຍ ຕິດພັນກັບການສ້າງຄວາມເປັນເຈົ້າການ ແລະ ເພີ່ມທະວີຂີດຄວາມສາມາດ ຂອງທ້ອງຖິ່ນຮາກຖານ. ຢາກໄດ້ຄືແນວນັ້ນຈະຕ້ອງກຳໄດ້ຂໍ້ມູນຄວາມທຸກຍາກຊຶ່ງແມ່ນໜຶ່ງໃນເງື່ອນໄຂຂອງການພັດທະນາ ແລະ ກຳໄດ້ຂໍ້ມູນຂອງຄອບຄົວ, ເພື່ອເປັນບ່ອນອີງໃຫ້ການກຳນົດເປົ້າໝາຍບູລິ ມະສິດ, ສ້າງເປັນແຜນງານ, ໂຄງການ ແລະມາດຕະການແກ້ໄຂປັບປຸງ, ແລ້ວກວດກາປະເມີນເປັນແຕ່ລະປີ-ສົມທຽບໃຫ້ເຫັນຄວາມຄືບໜ້າເປັນກ້າວໆໄປ ແຕ່ນີ້ຫາປີ 2015.

**2.2.ຂັ້ນຕອນການກວດກາປະເມີນ**

ວິທີການດຳເນີນແມ່ນໄດ້ປະຕິບັດຕາມຂັ້ນຕອນທີ່ໄດ້ລະບຸໄວ້ໃນ**ມາດຕາ12 ທີ່ວ່າ** ການສະເໜີ, ຢັ້ງຢືນ ແລະ ຮັບຮອງຄອບຄົວພົ້ນທຸກ ແລະ ຄອບຄົວ ພັດທະນາ ແມ່ນນາຍບ້ານ ເປັນຜູ້ສະເໜີ ຕໍ່ເຈົ້າເມືອງ ແລະ ເຈົ້າເມືອງ ເປັນ ຜູ້ອອກ ຂໍ້ຕົກລົງ ຮັບຮອງ,ບົນພື້ນຖານ ມີການກວດກາ, ປະເມີນຜົນ ແລະຢັ້ງຢືນຈາກໜ່ວຍງານ ຕ່າງໆ ທີ່ກ່ຽວຂ້ອງຂອງເມືອງ. ການສະເໜີ, ຢັ້ງຢືນ ແລະຮັບຮອງ ບ້ານພົ້ນທຸກ ແລະ ບ້ານພັດທະນາ ແມ່ນເຈົ້າເມືອງ ເປັນຜູ້ສະເໜີຕໍ່ເຈົ້າແຂວງ ການສະເໜີ, ຢັ້ງຢືນແລະ ຮັບຮອງ ເມືອງພົ້ນທຸກ ແລະເມືອງພັດທະນາ ແມ່ນເຈົ້າແຂວງ ເປັນຜູ້ສະເໜີຕໍ່ນາຍົກ ລັດຖະມົນຕີ ແລະປະຕິບັດຕາມຂັ້ນຕອນຄືຂ້າງເທິງຕາມຂັ້ນຂອງຕົນ.

1.ຢູ່ຂັ້ນສູນກາງໄດ້ຄົ້ນຄ້ວາເຊື່ອມຊຶມ ແລະເຂົ້າໃຈເປັນເອກະພາບບັນດານິຕິກຳຂອງພັກ-ລັດຖະບານ ກ່ຽວກັບວຽກງານກໍ່ສ້າງຮາກຖານພັດທະນາຊົນນະບົດຮອບດ້ານແລະລຶບລ້າງຄວາມທຸກຍາກ, ໂດຍສະເພາະແມ່ນດຳລັດ 285/ນຍ, ສ້າງເປັນເນື້ອໃນການຝຶກອົບຮົມຮັບໃຊ້ໃຫ້ການກວດກາປະເມີນ. ສ່ວນແບບສອບຖາມດ້ານຄວາມທຸກຍາກແມ່ນໄດ້ເອົາຕາມທີ່ໄດ້ຮ່ວມກະກຽມກັບກະຊວງກະສິກຳແລະປ່າໄມ້, ກະຊວງແຜນການແລະການລົງທຶນມາແລ້ວນັ້ນ.

2.ໄດ້ຈັດຕັ້ງຄະນະຮັບຜິດຊອບຊີ້ນຳການກວດກາປະເມີນຂັ້ນສູນກາງ[vi]ຂຶ້ນ ແລະແບ່ງກັນລົງໄປສົມທົບກັບບັນດາແຂວງຝຶກອົບຮົມໃຫ້ພະນັກງານ ຂັ້ນແຂວງ ແລະຂັ້ນເມືອງ ຢູ່ 4 ເຂດ[vii] ທົ່ວປະເທດ: ພາຍຫຼັງຝຶກອົບຮົມແລ້ວ, ແຕ່ລະເຂດລົງເຮັດທົດລອງເຂດລະ 1 ບ້ານ, ແລ້ວສະຫຼຸບຖອດຖອນບົດຮຽນ.

3. ຈາກນັ້ນ ແຂວງ-ເມືອງໄດ້ຈັດຕັ້ງຄະນະຮັບຜິດຊອບການກວດກາປະເມີນໃນຂັ້ນຂອງຕົນ ເພື່ອຈັດຕັ້ງຝຶກອົບຮົມໃຫ້ນາຍບ້ານ,ພະນັກງານກໍ່ສ້າງຮາກຖານແລະ ຂະແໜງການ- ແຕ່ລະເມືອງໄດ້ເຮັດທົດລອງຢູ່ 1 ບ້ານ ເພື່ອຖອດຖອນບົດຮຽນ, ແລ້ວຈຶ່ງຈັດຕັ້ງກັນລົງໃສ່ກຸ່ມບ້ານ ແລະບ້ານ. ບ້ານໄດ້ຈັດຕັ້ງການຮ່ຳຮຽນເຊື່ອມຊຶມ ໃຫ້ຄະນະບ້ານ, ເຖົ້າແກ່ແນວໂຮມ, ຫົວໜ້າໜ່ວຍ

ແລະພະນັກງານ ກໍ່ສ້າງຮາກຖານ ຊຶ່ງແມ່ນຜູ້ເຮັດໜ້າທີ່ກວດກາປະເມີນຕົວຈິງ ແລະເຜີຍແຜ່ ຊີ້ແຈງອະທິບາຍ ປຸກລະດົມປະຊາຊົນໃຫ້ເປັນເຈົ້າການປະກອບສ່ວນແລະໃຫ້ຄວາມຮ່ວມມື.

4. ການເກັບກຳຂໍ້ມູນ ກ່ຽວກັບຄອບຄົວທຸກຍາກແມ່ນ ໄດ້ສອບຖາມ,ສຳພາດ ແລະສັງເກດໄປແຕ່ລະຄອບຄົວ. ສ່ວນຂໍ້ມູນຄອບຄົວພັດທະນາ, ບ້ານທຸກຍາກ ແລະບ້ານພັດທະນາ ນັ້ນ ແມ່ນຄະນະບ້ານ, ເຖົ້າແກ່ແນວໂຮມ, ຫົວໜ້າໜ່ວຍ ພ້ອມດ້ວຍພະນັກງານທີ່ຖືກແຕ່ງຕັ້ງລົງເກັບກຳຂໍ້ມູນໄດ້ປຶກສາຫາລືກັນ, ປະເມີນເອົາໂດຍອີງຕາມມາດຕະຖານວາງອອກ.

5.ເມື່ອສຳເລັດການສັງລວມຂໍ້ມູນຂອງບ້ານແລ້ວ, ບັນດາບ້ານສ່ວນຫຼາຍໄດ້ເຕົ້າລວມປະຊາຊົນ ເພື່ອແຈ້ງຜົນຂອງການກວດກາປະເມີນໃຫ້ຊາບແລະປຶກສາຫາລືກັນສ້າງຄາດໝາຍສູ້ຊົນແລະມາດຕາການແກ້ໄຂລະອຽດ. ບ້ານໄດ້ກຳແໜ້ນ ບັນຊີຄອບຄົວທຸກຍາກ, ຄອບຄົວທີ່ຍັງບໍ່ໄດ້ຢັ້ງຢືນເປັນຄອບຄົວພັດທະນາ ພ້ອມທັງລາຍລະອຽດດ້ານຕ່າງໆ ທີ່ໄດ້ຈົດກ່າຍເຂົ້າໃນແບບສອບຖາມຄອບຄົວ ຊຶ່ງຄະນະບ້ານເປັນຜູ້ເກັບມ້ຽນເປັນເອກະສານຂໍ້ມູນຂອງຕົນ.

7.ຫຼັງຈາກທີ່ໄດ້ເປັນເອກະພາບກັນພາຍໃນບ້ານແລ້ວ, ກໍ່ລາຍງານຜົນຂອງການກວດກາປະເມີນໃຫ້ເມືອງ. ເມືອງໄດ້ສະຫຼຸບສັງລວມ ແລະກວດກາຢັ້ງຢືນຕາມການສະເໜີຂອງບ້ານ, ແລ້ວເປີດກອງປະຊຸມ ເພື່ອຕີລາຄາສະພາບຄວາມທຸກຍາກ ແລະການພັດທະນາ ຂອງແຕ່ລະບ້ານ -ກຸ່ມບ້ານ, ສຳຫຼວດກວດກາ ຄວາມຮັບຜິດຊອບຂອງແຕ່ລະພາກສ່ວນ, ແລະປຶກສາຫາລືບັນດາມາດຕະການເພື່ອແກ້ໄຂ.

8.ເມືອງສົ່ງຜົນການກວດກາປະເມີນໃຫ້ແຂວງ. ແຂວງໄດ້ສັງລວມຂໍ້ມູນແລະກວດກາຄືນການຢັ້ງຢືນຂອງບ້ານ-ຂອງເມືອງ ແລ້ວສະຫຼຸບສັງລວມທົ່ວແຂວງ, ຈາກນັ້ນຈຶ່ງໄດ້ເປີດກອງປະຊຸມເພື່ອຮອງຮັບເອົາຜົນການກວດກາປະເມີນ ແລະສຳຫຼວດກວດກາຄວາມຮັບຜິດຊອບຂອງຕົນຢ່າງມີປະຊາທິປະໄຕ ພາຍໃຕ້ການເປັນປະທານຂອງເຈົ້າແຂວງ ຫຼືຮອງເຈົ້າແຂວງ. ເມື່ອເປັນເອກະພາບກັນແລ້ວ, ທ່ານເຈົ້າແຂວງລົງລາຍເຊັນຮອງຮັບເອົາຢ່າງເປັນທາງການ ແລ້ວສົ່ງຂໍ້ມູນທີ່ຮອງຮັບເອົານັ້ນໃຫ້ ສູນກາງ (ຄພທຊ).

9. ຄພທຊ ເປັນຜູ້ສະຫຼຸບສັງລວມຂໍ້ມູນທົ່ວປະເທດ, ໂດຍໄດ້ສົ່ງໃຫ້ກະຊວງແຜນການແລະການລົງທຶນກໍ່ຄືບັນດາຂະແໜງການກ່ຽວຂ້ອງຂັ້ນສູນກາງຄົ້ນຄ້ວາປະກອບຄຳເຫັນ,ຈາກນັ້ນຈຶ່ງໄດ້ເປີດ ກອງປະຊຸມຮ່ວມກັນ ເພື່ອແລກປ່ຽນຂໍ້ມູນ, ແລ້ວປະສານໄປຫາ ແຂວງແລະເມືອງຄືນຈົນໄດ້ຕົວເລກທີ່ຄົບຖ້ວນແລະຈະແຈ້ງ ແລ້ວຈຶ່ງລາຍງານຂໍທິດຊີ້ນຳຈາກຂັ້ນເທິງ, ແລະໄດ້ເປີດກອງປະຊຸມສະຫຼຸບຖອດຖອນຂັ້ນສູນກາງພາຍໃຕ້ການເປັນປະທານຂອງທ່ານຮອງນາຍົກລັດຖະມົນຕີໃນວັນທີ 26-27 ກໍລະກົດ 2011.

## III.ເນື້ອໃນຂອງມາດຕະຖານ ແລະວິທີກວດກາປະເມີນ

### 3.1.ມາດຕະຖານຄວາມທຸກຍາກ ແລະວິທີການກວດກາປະເມີນ

#### ກ. ບັນດາເງື່ອນໄຂ ແລະວິທີການກວດກາປະເມີນ ຄວາມທຸກຍາກຂອງຄອບຄົວ

ມາດຕະຖານຄວາມທຸກຍາກ ແມ່ນເອົາຕາມມາດຕາ 3 ຂອງດຳລັດທີ່ລະບຸໄວ້ວ່າ ທົວໜ່ວຍຄິດໄລ່ ມາດຕະຖານຄວາມທຸກຍາກລະດັບບຸກຄົນແມ່ນຖືເອົາລາຍຮັບສະເລ່ຍ ຕໍ່ຄົນຕໍ່ເດືອນ ເປັນຂີດໝາຍ ໂດຍ ບໍ່ຈຳແນກເພດໄວ ແລະຖືເອົາ**ເງິນກີບເປັນຫລັກ** [viii] ສຳລັບເຂດຊົນນະບົດ ແມ່ນ 180.000 ກີບ/ຄົນ/ເດືອນ. ສຳລັບເຂດຕົວເມືອງແມ່ນ 240.000 ກີບ/ຄົນ/ເດືອນ. ການກວດກາປະເມີນຄັ້ງນີ້ແມ່ນເອົາລາຍຮັບ ຊຶ່ງໝາຍເຖິງເງິນທີ່ໄດ້ຮັບຈາກການຂາຍຜະລິດຕະພັນສິນຄ້າ, ເຄື່ອງປ່າຂອງນາ ກໍ່ຄືການບໍລິການຂອງຄອບຄົວໃນຕະຫຼອດໄລຍະເວລາ 12ເດືອນຜ່ານມາ, ບໍ່ໄດ້ເອົາມູນຄ່າ**ຊັບສິນທີ່ຄອບຄົວຄອບຄອງໄວ້** [ix] , ບໍ່ໄດ້ເອົາສິ່ງທີ່**ຊອກຫາມາໄດ້ພໍພຽງແຕ່ກິນແລະຊົມໃຊ້ໃນຄອບຄົວ, ຕ້ອງໃຫ້ໄດ້ຂາຍ ຈຶ່ງນັບເອົາ**[x] ຍົກເວັ້ນ ແຕ່ເຂົ້າກິນທີ່ຄອບຄົວຜະລິດໄດ້.

.ການເກັບກຳຂໍ້ມູນແມ່ນໃຊ້ການສຳພາດ ສອບຖາມແລະສັງເກດໄປແຕ່ລະຄອບຄົວ. ຈຸດປະສົງຕົ້ນຕໍແມ່ນເພື່ອຢາກຮູ້ວ່າ ຄອບຄົວນັ້ນມີລາຍຮັບໃນ 12 ເດືອນຜ່ານມາ ລື່ນ ຫຼືຫຼຸດ 180.000 ກີບຕໍ່ເດືອນຕໍ່ຄົນ. ບໍ່ໄດ້ເອົາມາຄິດໄລ່ລາຍຮັບສະເລ່ຍ (GDP) ຂອງບ້ານ ຊຶ່ງບໍ່ແມ່ນຈຸດປະສົງຂອງດຳລັດດັ່ງໄດ້ກ່າວມາແລ້ວແຕ່ເບື້ອງຕົ້ນ.

#### ຂ. ມາດຕະຖານ ຄວາມທຸກຍາກຂັ້ນບ້ານ ແລະວິທີການກວດກາປະເມີນ

ຕາມມາດຕາ 5 ຂອງດຳລັດ ບ້ານທຸກຍາກແມ່ນປະກອບດ້ວຍ 5 ເງື່ອນໄຂ ຄື: (1) ອັດຕາສ່ວນຄອບຄົວທຸກຍາກ ຢູ່ໃນບ້ານ ຊຶ່ງກວມ 51% ຂຶ້ນໄປ ແລະບໍ່ສາມາດເຂົ້າເຖິງສິ່ງອຳນວຍຄວາມສະດວກ ຫຼືການບໍລິການພື້ນຖານຂອງສາທາລະນະ ຄື (2) ບໍ່ສາມາດເຂົ້າເຖິງການຮຽນຊັ້ນປະຖົມ, (3) ບໍ່ສາມາດເຂົ້າເຖິງການບໍລິການສາທາລະນະສຸກ, (4) ບໍ່ມີນ້ຳສະອາດຊົມໃຊ້ (5) ບໍ່ມີເສັ້ນທາງເຖິງທີ່ຫຼວໄດ້ສອງລະດູເຂົ້າເຖິງ.

ການກວດກາປະເມີນບ້ານທຸກຍາກ ຈຶ່ງນັບເອົາອັດຕາສ່ວນຂອງຄອບຄົວທຸກຍາກ ແລະກວດກາ ສັງເກດ ເອົາບັນດາສິ່ງອຳນວຍຄວາມສະດວກທັງ 4 ຢ່າງ. ບ້ານໃດມີ ຕັ້ງແຕ່ໜຶ່ງເງື່ອນໄຂໃນ 5 ເງື່ອນໄຂນີ້ ແມ່ນໄດ້ຈັດວ່າເປັນບ້ານທຸກຍາກ.

### 3.2.ເນື້ອໃນແບບສອບຖາມແລະວິທີການກວດກາປະເມີນການພັດທະນາ

ວິທີການກວດກາປະເມີນ ຄອບຄົວພັດທະນາ ແລະບ້ານພັດທະນາ ແລະບ້ານທຸກຍາກ ແມ່ນເຮັດແບບດຽວກັນ ໂດຍແມ່ນຄະນະພັກ, ອຳນາດການປົກຄອງບ້ານແລະເຖົ້າແກ່ແນວໂຮມເປັນຜູ້

ປະເມີນ ອີງຕາມມາດຕະຖານທີ່ລະບຸໄວ້ໃນມາດຕາ 5 ແລະມາດຕາ 8 ຂອງດຳລັດ. ມັນແຕກຕ່າງຈາກການປະເມີນຄອບຄົວທຸກຍາກທີ່ຕ້ອງໄດ້ສຳພາດສອບຖາມສັງເກດ ໄປແຕ່ລະຄອບຄົວ.

ເງື່ອນໄຂການພັດທະນາແມ່ນຄົບຕາມ 4 ເນື້ອໃນ 4 ຄາດໝາຍ. ການກວດກາປະເມີນກ່ອນອື່ນໝົດແມ່ນ ເອົາອັດຕາສ່ວນຂອງຄອບຄົວພັດທະນາທີ່ຈະໃຫ້ຕ້ອງກາຍ85% ຂອງຈຳນວນຄອບຄົວທັງໝົດໃນບ້ານ.

ສ່ວນເງື່ອນໄຂທາງດ້ານ**ຄວາມຕື່ນຕົວດ້ານການເມືອງ-** ຄວາມສາມັກຄີ ຮັກແພງຊຶ່ງກັນແລະກັນຂອງປະຊາຊົນ ແລະ**ດ້ານ ກປສ-ກປຊ** ແມ່ນຄະນະພັກ, ອຳນາດການປົກຄອງທ້ອງຖິ່ນແລະເຖົ້າແກ່ແນວໂຮມໄດ້ປຶກສາຫາລືກັນ ຕີລາຄາໄປ ເທື່ອລະຄອບຄົວ ອີງຕາມເງື່ອນໄຂ, ສະພາບແວດລ້ອມດ້ານຕ່າງໆຂອງທ້ອງຖິ່ນເອງ. ສ່ວນຄວາມເຂັ້ມແຂງຂອງອຳນາດການປົກຄອງທ້ອງຖິ່ນນັ້ນແມ່ນຖືເອົາໃບຢັ້ງຢືນ ໜ່ວຍພັກແຂງຮູ້ນຳພາຮອບດ້ານເປັນຫຼັກ.

**ນາມມະຍົດ**ຕ່າງໆ ແມ່ນໄດ້ເອົາຕາມການກວດກາປະເມີນຢັ້ງຢືນ ຂອງຂະແໜງການກ່ຽວຂ້ອງ. ໃນເວລາເຮັດຕົວຈິງ ຢູ່ຫຼາຍບ່ອນໄດ້ກວດກາປະເມີນຢັ້ງຢືນນາມມະຍົດດັ່ງກ່າວ ໄປພ້ອມກັບການ ກວດກາປະເມີນດຳລັດ 285 ນີ້ເລີຍ.

**ໂຄງລ່າງສິ່ງອຳນວຍຄວາມສະດວກ** [xi] ແມ່ນໄດ້ກວດກາປະເມີນເອົາຕາມສະພາບຄວາມເປັນຈິງຂອງບ້ານນັ້ນ ໂລດວ່າມີຫຼືບໍ່ມີ.

## IV. ຂໍ້ຈຳກັດຂອງການກວດກາປະເມີນ

ຜົນຂອງການກວດກາປະເມີນ ໃນຄັ້ງນີ້ກໍ່ອາດຈະບໍ່ສ່ອງແສງ ໃຫ້ເຫັນຄວາມເປັນຈິງໄດ້ຢ່າງຄົບຖ້ວນສົມບູນໄດ້ດ້ວຍຂໍ້ຈຳກັດຈຳນວນໜຶ່ງ ເປັນຕົ້ນແມ່ນ ເວລາຂອງການຢັ້ງຢືນນາມມະຍົດຄອບຄົວ, ບ້ານ ຂອງບັນດາຂະແໜງການກ່ຽວຂ້ອງແຕກຕ່າງກັນ, ບາງຂະແໜງການ ກໍ່ຍັງບໍ່ທັນໄດ້ອອກມາດຕະຖານເປັນນິຕິກຳບັງຄັບໃຊ້ຄັກແນ່ເທື່ອ, ຄວາມຮັບຮູ້ອັດຕະວິໄສ ຂອງແຕ່ລະທ້ອງຖິ່ນໃນການຕີລາຄາເງື່ອນໄຂທີ່ເປັນ ຄຸນນະພາບ (ເຊັ່ນຄວາມຕື່ນຕົວດ້ານການເມືອງ) ກໍ່ຄື ການຕີຄວາມໝາຍຂອງເງື່ອນໄຂຕ່າງໆຂອງດຳລັດ, ຈຸດອ່ອນຂອງການເອົາລາຍຮັບເປັນມາດຕະຖານ (ຄົນເຮົາມັກເຊື່ອງອຳລາຍຮັບ), ຊ່ອງຫວ່າງຂອງນິຍາມລາຍຮັບ (ເຊັ່ນບໍ່ນັບເອົາຜົນຜະລິດ ທີ່ເອົາມາຊົມໃຊ້ເອງ), ລະດັບຄວາມຮູ້ຄວາມສາມາດ ແລະ ປະສົບປະການໃນການກວດກາປະເມີນ ຂອງພະນັກງານທ້ອງຖິ່ນ, ຈິດຕະສາດຂອງປະຊາຊົນຜູ້ໃຫ້ຂໍ້ມູນ, ເວລາ ແລະ ງົບປະມານຈຳກັດ, ບົດຮຽນ ແລະ ປະສົບການໃນການປະເມີນຍັງມີໜ້ອຍ ແລະ ມີອື່ນໆອີກ.

## V. ສັງລວມ ຜົນຂອງການກວດກາປະເມີນ ຕາມດຳລັດ 285/ນຍ

(ຂໍ້ມູນລະອຽດແມ່ນເບິ່ງຕາມ ***ປື້ມຂໍ້ມູນຄວາມທຸກຍາກ ແລະການພັດທະນາຕາມແຂວງ ແລະເມືອງ, ປື້ມຂໍ້ມູນຄວາມທຸກຍາກ ແລະການພັດທະນາຂອງ 64ຈຸດສຸມ,*** ແລະ ***ປື້ມບັນຊີ ບ້ານທຸກຍາກໃນທົ່ວປະເທດ*** ທີ່ສົ່ງມາພ້ອມນີ້).

**5.1. ຂໍ້ມູນສັງລວມຕາມມາດຕະຖານດ້ານຄວາມທຸກຍາກ** ແລະ**ການພັດທະນາ** :

ການກວດກາ ແລະ ປະເມີນຄັ້ງນີ້ໄດ້ກວມເອົາ **1.053.349 ຄອບຄົວ 8.654 ບ້ານ, 1.100 ກຸ່ມບ້ານ ຢູ່ 143 ເມືອງ, 17** ແຂວງທົ່ວປະເທດ ແລະ ປະເມີນໄດ້ວ່າ:

**ໃນຈຳນວນ 1.053.349 ຄອບຄົວ,**

- ມີຄອບຄົວພົ້ນທຸກ 853,591 ຄອບຄົວ; ໃນນັ້ນມີ 498.493 ຄອບຄົວ ເປັນຄອບຄົວພັດທະນາ.
- ມີຄອບຄົວບໍ່ທັນພັດທະນາ 554.856ຄອບຄົວ,ໃນນັ້ນ ມີຄອບຄົວທຸກຍາກ 199.758 ຄອບຄົວ; *(ນາຍບ້ານມີບັນຊີ ຄອບຄົວທຸກຍາກ-ຄອບຄົວຍັງບໍ່ທັນພັດທະນາ, ຍັງດ້ານທີ່ແຕ່ລະຄອບຄົວຍັງຄົງຄ້າງ ໂດຍລະອຽດ)*

**ໃນຈຳນວນ 8.654 ບ້ານ**

-ມີບ້ານພົ້ນທຸກ 5.438 ບ້ານ, ໃນນັ້ນ ເປັນບ້ານພັດທະນາ 900 ບ້ານ

-ມີບ້ານຍັງບໍ່ທັນພັດທະນາ 7.754 ບ້ານ, ໃນນັ້ນ ເປັນບ້ານທຸກຍາກ 3.216 ບ້ານ

(ບັນຊີບ້ານທຸກຍາກ ຍັງທຸກຍາກຂາດເຂີນດ້ານໃດ ແມ່ນ ຄພທຊ ຈະໄດ້ຈັດພິມເຜີຍແຜ່.)

**ໃນຈຳນວນ 1.100 ກຸ່ມບ້ານ**

- ມີກຸ່ມບ້ານພັດທະນາ 11 ກຸ່ມບ້ານ; ຍັງບໍ່ທັນພັດທະນາ 1.089 ກຸ່ມບ້ານ

**ໃນຈຳນວນ 143 ເມືອງ**

-ມີເມືອງພົ້ນທຸກ 89 ເມືອງ, ໃນນັ້ນ ບໍ່ມີເມືອງພັດທະນາຈັກເມືອງ;

-ມີເມືອງທຸກຍາກ 54 ເມືອງ

**5.2. ຂໍ້ມູນຕາມແຂວງ**

ແຂວງທີ່ມີອັດຕາສ່ວນ ຄອບຄົວພັດທະນາ,ບ້ານພັດທະນາແລະກຸ່ມບ້ານພັດທະນາຫຼາຍກ່ວາໝູ່ ແລະມີອັດຕາຄວາມທຸກຍາກຕ່ຳກວ່າໝູ່ແມ່ນ : ນະຄອນຫຼວງ, ໄຊຍະບູລີ, ບໍລິຄຳໄຊ ແລະຈຳປາສັກ. ສ່ວນແຂວງທີ່ມີລະດັບການສ້າງບ້ານແລະກຸ່ມບ້ານພັດທະນາຕ່ຳກວ່າໝູ່ ແລະມີອັດຕາຄວາມທຸກຍາກສູງ ກວ່າໝູ່ ແມ່ນບັນດາແຂວງຜົ້ງສາລີ , ຫົວພັນ, ຫຼວງນ້ຳທາ, ອຸດົມໄຊ ແລະແຂວງເຊກອງ. ລະອຽດແມ່ນເບິ່ງຕາມເອກະ ສານຊ້ອນທ້າຍ.

**ເວົ້າລວມແລ້ວ ຂໍ້ມູນຈາກການກວດກາປະເມີນຄັ້ງນີ້ກ່ອນອື່ນໝົດ ແມ່ນຂໍ້ມູນຕົວຕັ້ງຕາມ 4 ເນື້ອໃນ 4ຄາດໝາຍ ທີ່ຄະນະພັກ, ອຳນາດການປົກຄອງທ້ອງຖິ່ນສ້າງຂຶ້ນມາຕາມການເກັບກຳຂໍ້ມູນແບບບໍລິຫານກວມເອົາທຸກໆຄອບຄົວ, ທຸກໆບ້ານ ແລະ ທຸກໆກຸ່ມບ້ານໃນເມືອງ, ແຂວງຂອງ**

**ຕົນ ເພື່ອຮັບໃຊ້ໃຫ້ການກຳນົດຈຸດສຸມບຸລິມະສິດ, ວາງແຜນ, ສ້າງໂຄງການ ສ້າງບ້ານແລະກຸ່ມບ້ານພັດທະນາ ແລະແກ້ໄຂຄວາມທຸກຍາກໃນທ້ອງຖິ່ນຂອງຕົນ ໃນໄລຍະ 2011-2015 ຕາມເນື້ອໃນຈິດໃຈຂອງ ມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກ, ກໍ່ຄືແຜນພັດທະນາເສດຖະກິດສັງຄົມຫ້າປີຄັ້ງທີVII, ແລະເປັນຂໍ້ມູນທີ່ເປັນພື້ນຖານເພື່ອຜັນຂະຫຍາຍ ຄຳສັ່ງເລກທີ 03/ ກມສພ ວ່າດ້ວຍການສ້າງບ້ານໃຫ້ເປັນຫົວໜ່ວຍພັດທະນາ, ສ້າງບ້ານໃຫຍ່ໃຫ້ເປັນເມືອງນ້ອຍໃນຊົນນະບົດ - ບໍ່ແມ່ນຂໍ້ມູນມະຫາພາກວັດແທກອັດຕາຄວາມທຸກຍາກທີ່ຈະໄດ້ຍັ້ງຢືນຕໍ່ສາກົນກ່ຽວກັບການບັນລຸເປົ້າໝາຍສະຫັດສະວັດ ແຫ່ງການພັດທະນາ.**

ເມື່ອທຽບຂອບເຂດຂອງເປົ້າໝາຍ ແລະຜົນຂອງການກວດກາປະເມີນ ໃສ່ກັບງົບປະມານ ແລະ ບຸກຄະລາກອນ ແລ້ວ ເຫັນວ່າ ການກວດກາປະເມີນຄັ້ງນີ້ ແມ່ນຄຸ້ມຄ່າ ແລະ ມີປະສິດທິຜົນ ແລະ ສ່ອງແສງໃຫ້ເຫັນສະພາບຄວາມເປັນຈິງຂອງການສ້າງບ້ານພັດທະນາໄດ້ຊັດເຈນພໍສົມຄວນ. ຖ້າດຳເນີນການສຳຫຼວດຕາມວິທີວິທະຍາແບບອື່ນນັ້ນຈະໃຊ້ງົບປະມານ, ເວລາ ແລະ ບຸກຄະລາກອນຫຼາຍກ່ວານີ້ຫຼາຍເທົ່າ.

## VI. ບົດຮຽນທີ່ຖອດຖອນໄດ້:

1. ກ່ອນອື່ນໝົດແມ່ນຈະຕ້ອງເຊື່ອມຊຶມຢ່າງເລິກເຊິ່ງ ຕໍ່ມະຕິຄຳສັ່ງຕ່າງໆ ຕະຫລອດຮອດຄຳແນະນຳດ້ານວິຊາການຈຶ່ງເຮັດໃຫ້ຂະບວນການກວດກາປະເມີນດຳເນີນໄປຢ່າງມີປະສິດທິຜົນ.
2. ການກວດກາປະເມີນຄັ້ງນີ້ ແມ່ນດຳເນີນໄປແບບມີສ່ວນຮ່ວມ ຂອງຂະແໜງການ, ຄະນະພັກ, ອຳນາດການປົກຄອງ ກໍ່ຄື ປະຊາຊົນບັນດາເຜົ່າຢ່າງກວ້າງຂວາງ, ອັນເປັນປັດໃຈພື້ນຖານເຮັດໃຫ້ການກວດກາປະເມີນ ສ່ອງແສງໃຫ້ເຫັນສະພາບຄວາມເປັນຈິງໄດ້ດີ ທັງປະຫຍັດທຶນຮອນ ແລະ ເວລາ.
3. ບົດບາດຂອງຄະນະນຳຂອງທ້ອງຖິ່ນ ເປັນປັດໃຈໜຶ່ງທີ່ຕັດສິນຜົນສຳເລັດ ບ່ອນໃດຄະນະນຳເປັນເຈົ້າການເຂົ້າຮ່ວມ ແລະ ໃຫ້ການຊີ້ນຳ ຂະບວນການດຳເນີນຕັ້ງແຕ່ຕົ້ນຕະຫລອດປາຍ, ບ່ອນນັ້ນ ຈະມີຄວາມສຳເລັດທີ່ມີຄຸນນະພາສູງກວ່າ ໄວກວ່າ.
4. ການເອົາໃຈໃສ່ ດຳເນີນການກວດກາປະເມີນຕິດພັນກັບ ການສ້າງພະນັກງານກັບທີ່ ເຮັດໃຫ້ສາມາດຜັນຂະຫຍາຍ ແລະ ນຳໃຊ້ ຜົນຂອງການກວດກາປະເມີນຄັ້ງນີ້ເຂົ້າໃນວຽກງານຕົວຈິງຢຢ່າງມີປະສິທິຜົນ.
5. ການປະສານສົມທົບຢ່າງເປັນເອກະພາບ ແລະ ພ້ອມພຽງຂອງບັນດາຂະແໜງການ ເປັນປັດໃຈໜຶ່ງທີ່ມີລັກສະນະຕັດສິນການກວດກາປະເມີນຄັ້ງນີ້.

# ພາກທີສອງ:

# ທິດທາງແຜນການຈັດຕັ້ງຜັນຂະຫຍາຍ ຜົນຂອງການກວດກາປະເມີນໃນຕໍ່ໜ້າ

## I. ບາງທິດທາງໃນການຈັດຕັ້ງຜັນຂະຫຍາຍ ຜົນຂອງການກວດກາປະເມີນ

ເພື່ອຜັນຂະຫຍາຍ ຜົນຂອງການກວດກາປະເມີນໃນຄັ້ງນີ້ ເຂົ້າໃນ ການຈັດຕັ້ງ ປະຕິບັດຕາມຄຳສັ່ງເລກທີ 03/ກມສພ ວ່າດ້ວຍການສ້າງບ້ານໃຫ້ເປັນຫົວໜ່ວຍ ພັດທະນາ, ສ້າງບ້ານໃຫຍ່ໃຫ້ກາຍເປັນຕົວເມືອງນ້ອຍຢູ່ຊົນນະບົດ, ໂດຍສູ້ຊົນສ້າງໃຫ້ກ່ວາເຄິ່ງໜຶ່ງຂອງຈຳນວນບ້ານ ໃນທົ່ວປະເທດກາຍເປັນບ້ານພັດທະນາໃນ ປີ 2015, ຕ້ອງໄດ້ເອົາໃຈໃສ່ປະຕິບັດຕາມບາງທິດທາງດັ່ງນີ້:

1. ຊຸກຍູ້ ຊີ້ນຳ ຄວາມເປັນເຈົ້າການ ແລະສ້າງຄວາມເຂັ້ມແຂງໃຫ້ແກ່ບ້ານ, ໂດຍສະເພາະສະຖິຕິຂັ້ນບ້ານແລະຄະນະບ້ານ ແລະເມືອງໃນການເກັບຮັກສາສຳເນົາ, ສ້າງຖານຂໍ້ມູນ-ນຳໃຊ້ຂໍ້ມູນດັ່ງກ່າວເຂົ້າໃນການສ້າງໂຄງການ, ແຜນການແບບມີສ່ວນຮ່ວມຂຶ້ນມາແຕ່ບ້ານ.

2. ພາກສ່ວນ ແລະຂະແໜງການຕ່າງໆທີ່ກ່ຽວຂ້ອງ ຕ້ອງໄດ້ນຳເອົາຜົນດັ່ງກ່າວນີ້ໄປນຳໃຊ້ເຂົ້າໃນການສ້າງເປັນແຜນການໂຄງການ ຄາດໝາຍສູ້ຊົນຂອງຂະແໜງການຂອງຕົນ ດ້ວຍຄວາມຮັບຜິດຊອບ, ຊີ້ນຳສາຍຕັ້ງຂອງຕົນຢູ່ແຂວງຢູ່ເມືອງ ໃຫ້ຜັນຂະຫຍາຍລົງສູ່ຄອບຄົວບ້ານໃຫ້ປະກົດເປັນຈິງ.

3. ຮີບຮ້ອນ ຈັດພິມເຜີຍແຜ່ຜົນຂອງການກວດກາປະເມີນ ຂອງທົ່ວປະເທດ ກໍຄືຂອງ ທ້ອງຖິ່ນໃຜມັນ, ໃນນັ້ນໃຫ້ມີ ບັນຊີລາຍຊື່ບ້ານທຸກຍາກ, ເງື່ອນໄຂທີ່ພາໃຫ້ທຸກຍາກ, ບັນຊີລາຍຊື່ບ້ານ ທີ່ຍັງບໍ່ທັນໄດ້ປະກາດເປັນ ບ້ານພັດທະນາ, ເງື່ອນໄຂທີ່ພາໃຫ້ຄົງຄ້າງ.

4. ຮ່ວມກັບພາກສ່ວນກໍຄືຂະແໜງການກ່ຽວຂ້ອງຈັດຕັ້ງການໂຄສະນາເຜີຍແຜ່ຜົນຂອງການກວດກາປະເມີນໃຫ້ ບັນດາອົງການຈັດຕັ້ງສັງຄົມ, ສະຖາບັນການເງິນພາຍໃນແລະຕ່າງປະເທດທັງທາງກ້ວາງ ແລະທາງເລິກ ເປັນຕົ້ນແມ່ນໂຄສະນາທາງສື່ມວນຊົນ, ຈັດສຳມະນາວິທະຍາສາດ, ຈັດຝຶກອົບຮົມແລະອື່ນໆ.

5. ຮ່ວມກັບບັນດາຂະແໜງປັບປຸງມາດຕະຖານກໍຄືເນື້ອໃນດຳລັດ 285/ນຍໂດຍໄວ, ສຶກສາຄວາມເປັນໄປໄດ້ໃນການຮຽບຮຽງປັບປຸງມາດຕະຖານ, ວິທີວິທະຍາ, ກຳນົດເວລາ ກວດກາຢັ້ງຢືນນາມະຍົດຂອງບັນດາຂະແໜງການທີ່ກ່ຽວຂ້ອງໃຫ້ກົມກືນເປັນຈັງຫວະເອກະພາບກັນເພື່ອສ່ອງແສງໃຫ້ເຫັນຄວາມຄືບໜ້າຂອງການສ້າງບ້ານແລະກຸ່ມບ້ານພັດທະນາ ທີ່ຖືກຕ້ອງພາວະວິໃສທີ່ສຸດ ແລະເປັນພື້ນຖານໃຫ້ແກ່ການດຳເນີນການແກ້ໄຂໄປຕາມທິດແລະລວງດຽວກັນ, ເມື່ອເປັນເອກະພາບກັນແລ້ວຂໍອະນຸມັດຈາກຂັ້ນເທິງ.

6. ສຶກສາຄົ້ນຄ້ວາຄວາມເປັນໄປໄດ້ ໃນການປະສານສົມທົບ ຂໍ້ມູນຜົນຂອງການກວດກາປະເມີນຄັ້ງນີ້ໃນຖານະທີ່ເປັນຂໍ້ມູນຂັ້ນຈຸລະພາກ ກັບຜົນຂອງການສຳຫຼວດ LECS ໃນຖານະທີ່ເປັນຂໍ້ມູນມະຫາພາກ ໃຫ້ກົມກືນແລະຊ່ວຍຊູຍູ້ໜູນກັນ.

7. ຊີ້ນຳທ້ອງຖິ່ນຕ່າງໆ ກະກຽມການກວດກາປະເມີນຄວາມຄືບໜ້າ ຂອງການສ້າງບ້ານພັດທະນາ ຕາມດຳລັດ 285/ນຍ ປະຈຳປີ 2012 ໃຫ້ໄດ້ດີ (ບໍ່ແມ່ນການປະເມີນໃຫຍ່ຄືຄັ້ງທຳອິດ)

## II. ຂໍ້ສະເໜີ:

1. ສະເໜີຂັ້ນເທິງພິຈາລະນາອະນຸມັດໃຫ້ດຳເນີນການກວດກາປະເມີນ ຄວາມຄືບໜ້າ ຂອງການສ້າງບ້ານພັດທະນາ ຕາມດຳລັດ 285/ນຍ ປະຈຳປີ 2011-2012 ກໍ່ຄື ໃນແຕ່ລະປີ ໃນເດືອນກຸມພາ (2)-ມີນາ (3) ແຕ່ນີ້ຫາ ປີ2015.
2. ການກວດກາປະເມີນໃຫຍ່ທົ່ວປະເທດ ແມ່ນສະເໜີໃຫ້ດຳເນີນໄປໃນ ເດືອ**ນກຸມພາ-ມີນາ ປີ 2015 ເພື່ອໃຫ້ທັນສະໜອງຂໍ້ມູນ ແກ່ປະຊຸມໃຫຍ່ຄັ້ງທີ X ຂອງພັກ ກໍ່ຄືແຜນພັດທະນາເສດຖະກິດສັງຄົມແຫ່ງຊາດຫ້າປີຄັ້ງທີ VIII.**

ກອງເລຂາຄະນະຮັບຜິດຊອບການກວດກາປະເມີນ
ຄວາມທຸກຍາກ ຕາມດຳລັດ 285/ນຍ
(ຫ້ອງການຄະນະຊີ້ນຳພັດທະນາຊົນນະບົດ
ແລະລຶບລ້າງຄວາມທຸກຍາກແຫ່ງຊາດ)

## ຄຳອະທິບາຍ

[i] ປະຈຸບັນ ມີນາມະຍົດ ຄອບຄົວແລະບ້ານສາທາລະນະສຸກແບບຢ່າງ, ຄອບຄົວແລະບ້ານປອດຄະດີ, ຄອບຄົວແລະບ້ານປອດຢາເສບຕິດ, ຄອບຄົວແລະບ້ານວັດທະນະທຳ, ບ້ານຈົບການສຶກສາພາກບັງຄັບ, ຄອບຄົວແລະບ້ານສາມດີ. ສ່ວນນາມະຍົດ ຄອບຄົວແລະບ້ານ ປກສດີ ນັ້ນ ພວມຢູ່ໃນຂັ້ນຕອນປຶກສາຫາລືຮັບຮອງເອົາ (ຂໍ້ມູນຂອງກົມຄຸ້ມຄອງພົນລະເມືອງ, ກະຊວງ ປກສ). ປກຊ ແມ່ນໃຊ້ " ບ້ານປ້ອມໝັ້ນ, ກຸ່ມບ້ານສູ້ຮົບຕິດລຽນ" (ຂໍ້ມູນຂອງກົມສູ້ຮົບ, ກະຊວງປ້ອງກັນປະເທດ).

[ii] Lao Expenditure and Consumption Survey, ຄັ້ງລ້າສຸດແມ່ນ LECS IV ດຳເນີນໃນປີ 2008. LECS IIIໄດ້ສຳຫຼວດກຸ່ມຕົວຢ່າງ ທີ່ປະກອບດ້ວຍ 8,092 ຄົວເຮືອນ ຈາກ 540 ບ້ານຢູ່ທຸກເມືອງໃນທົ່ວປະເທດ ແລະໄດ້ພົບເຫັນວ່າອັດຕາຄວາມທຸກຍາກຂອງຄົວເຮືອນຂອງທົ່ວປະເທດແມ່ນ 27,7% ແລະມີ 72 ເມືອງທີ່ຍັງຢູ່ໃນສະພາບທີ່ທຸກຍາກ ແລະ ໃນນັ້ນ ຍັງມີ 47 ເມືອງທີ່ທຸກຍາກທີ່ສຸດ; ແລະໄດ້ຖືເອົາເມືອງເປັນເປົ້າໝາຍໃນການແກ້ໄຂຄວາມທຸກຍາກແຕ່ບັດນັ້ນເປັນຕົ້ນມາ.

[iii] ແຈ້ງການຄລບ ເລກທີ...

[iv] ດຳລັດ285/ນຍ ແມ່ນໄດ້ປະກາດໃຊ້ຕັ້ງແຕ່13/10/2009,ໂດຍຫຼັກການແລ້ວ ຈະຕ້ອງໄດ້ກວດກາປະເມີນໃຫ້ສຳເລັດ ແລະສາມາດສະໜອງຂໍ້ມູນໃຫ້ການສະຫຼຸບຕີລາຄາ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດສັງຄົມຫ້າປີຄັ້ງທີ VI (2006-2010) ເປັນພື້ນຖານໃຫ້ແກ່ການຮ່າງແຜນການຫ້າປີ ຄັ້ງທີ VII (2011-2015) ກໍ່ຄື ໃຫ້ແລ້ວກ່ອນກອງປະ ຊຸມໃຫຍ່ຄັ້ງທີ IX ຂອງພັກ.

[v] ຂໍ້ມູນຕົວຕັ້ງ ພາສາອັງກິດ ວ່າ Baseline -ແມ່ນຂໍ້ມູນທີ່ເປັນຄ່າຕັ້ງໄວ້ເປັນຫຼັກເພື່ອເອົາຄ່າອື່ນໆມາສົມທຽບໃສ່.

[vi] ບັນດາຂະແໜງການຂອງພັກ ແລະລັດທີ່ປະກອບເຂົ້າໃນຄະນະຮັບຜິດຊອບການກວດກາປະເມີນລວມມີ ຫ້ອງວ່າການສູນກາງພັກ, ກະຊວງປກສ, ກະຊວງໂຍທາທິການແລະຂົນສົ່ງ, ກະຊວງກະສິກຳແລະປ່າໄມ້, ກະຊວງສຶກສາທິການ, ກະຊວງສາທາລະນະສຸກ, ກະຊວງຍຸຕິທຳ, ກະຊວງຖະແຫຼງຂ່າວແລະວັດທະນະທຳ.

[vii] ການແບ່ງເຂດກວດກາປະເມີນ : ເຂດI ລວມມີບັນດາແຂວງຜົ້ງສາລີ, ບໍ່ແກ້ວ, ອຸດົມໄຊ, ຫຼວງນ້ຳທາ; ເຂດ II ລວມມີ ບັນດາແຂວງ ໄຊຍະບູລີ, ຫຼວງພະບາງ, ຫົວພັນ, ຊຽງຂວາງ; ເຂດIII ລວມມີ ນະຄອນຫຼວງວຽງຈັນ, ແຂວງວຽງຈັນ, ແຂວງບໍລິຄຳໄຊ, ແຂວງຄຳມ່ວນ ແລະ ແຂວງສະຫວັນນະເຂດ; ເຂດ IV ລວມມີ ແຂວງຈຳປາສັກ, ແຂວງສາລະວັນ, ແຂວງອັດຕະປື ແລະແຂວງເຊກອງ.

[viii] ການທີ່ຖືເອົາເງິນເປັນເງື່ອນໄຂສັງລວມວັດແທກຄວາມທຸກຍາກກໍ່ແມ່ນຍ້ອນວ່າມາຮອດປັດຈຸບັນການຂະຫຍາຍຕົວຂອງເສດຖະກິດຕະຫລາດຂອງປະເທດເຮົາ ຢູ່ໃນລະດັບທີ່ແນ່ນອນ, ໂດຍທົ່ວໄປຖ້າມີເງິນແມ່ນສາມາດໄປຫາຊື້ວັດຖຸສິ່ງຂອງໄດ້ແລະຖ້າມີສິນຄ້າກໍ່ແມ່ນສິ່ງເຂົ້າເຖິງຕະຫຼາດໄດ້,ແລະກໍ່ເພື່ອເຮັດໃຫ້ຈັດຕັ້ງປະຕິບັດງ່າຍ

[ix] ການກວດກາປະເມີນບໍ່ໄດ້ນັບເອົາຊັບສິນໃນການຄອບຄອງຍ້ອນວ່າ ວັດແທກຄວາມທຸກຍາກແມ່ນວັດແທກລະດັບຄວາມຢູ່ດີກິນດີ-ບໍ່ແມ່ນວັດແທກມູນຄ່າຊັບສິນທີ່ຄົນຜູ້ນັ້ນໆຄອບຄອງໄວ້. ໃນທາງທິດສະດີ ຊັບສິນສ່ວນທີ່ຄອບຄອງໄວ້ນັ້ນເຮັດໃຫ້ເຈົ້າຂອງລຳບາກ-ສ່ວນທີ່ໄດ້ຊົມໃຊ້ (ຂາຍມາຮັບໃຊ້ຕົນເອງ) ເທົ່ານັ້ນ ທີ່ພາໃຫ້ຜູ້ກ່ຽວມີສະຫວັດດີພາບດີຂຶ້ນ. ໃນທາງປະຕິບັດ ຖ້າມີວັດຖຸສິ່ງຂອງຄອບຄອງ ໄວ້ຫຼາຍເຫຼືອກິນເຫຼືອໃຊ້ ແຕ່ບໍ່ຂາຍເພື່ອມາຮັບຕົນເອງແລະຄອບຄົວໃນຕະຫຼອດໄລຍະ 12 ເດືອນຜ່ານມາ ກໍສະແດງວ່າຍັງທຸກຢູ່.

[x] ການກວດກາປະເມີນບໍ່ໄດ້ນັບເອົາສິ່ງທີ່ຜະລິດແລະຫາມາໄດ້ສະເພາະການຊົມໃຊ້ໃນຄອບຄົວ,ເຮັດຄືແນວນີ້ແມ່ນເພື່ອຍົກມາດຕະຖານຄວາມຢູ່ດີກິນດີໃຫ້ສູງຂຶ້ນ ແນໃສ່ ທັບມ້າງ ແລະຫັນປ່ຽນແບບວິທີດຳລົງຊີວິດທຳມາຫາກິນແບບພໍກຸ້ມຕົນເອງທີ່ອີງໃສ່ທຳມະຊາດເປັນຈຸດໜັກ ໄປສູ່ການຜະລິດເປັນສິນຄ້າ ທີ່ນຳໃຊ້ເຕັກນິກວິທະຍາການທີ່ທັນສະໄໝເປັນກ້າວໆ. ຖ້າຜະລິດຫຼືຊອກຫາມາໄດ້ພໍພຽງແຕ່ກຸ້ມກິນແລະຊົມໃຊ້ໃນຄອບຄົວເທົ່ານັ້ນ ແລະບໍ່ສາມາດກາຍເປັນສິນຄ້າໄດ້ຂາຍໄດ້ແລກປ່ຽນ ເຖິງວ່າ ໃນປະຈຸບັນ ຄອບຄົວຈະອຸດົມສົມບູນຢູ່ດີກິນດີກໍຕາມ, ຄວາມຢູ່ດີກິນດີນັ້ນ ແມ່ນບໍ່ໝັ້ນຄົງ ແລະມີລັກສະນະຊົ່ວຄາວ ຂຶ້ນກັບການເອື້ອອຳນວຍຂອງເງື່ອນໄຂທຳມະຊາດ ແມ່ນຍັງຖືວ່າມີຄວາມສ່ຽງສູງທີ່ຈະຕົກທຸກໄດ້ຍາກຄືນ.

[xi] **ໂຄງລ່າງສິ່ງອຳນວຍຄວາມສະດວກຂອງບ້ານພັດທະນາ: ບ້ານ**ມີສະຫະກອນ, ມີກຸ່ມການຜະລິດສິນຄ້າແລະບໍລິການ, ມີຄັງສະສົມ, ມີກອງທຶນບ້ານ, ມີແຜນຜັງ, ມີເສັ້ນທາງ, ມີໄຟຟ້າ, ມີຫ້ອງການສະໂມສອນ, ມີເດີ່ນກິລາ ແລະສິ່ງອຳນວຍຄວາມສະດວກອື່ນໆ ທີ່ຮັບໃຊ້ກິດຈະກຳລວມຂອງບ້ານ.

ເອກະສານຊ້ອນທ້າຍ I

# ສັງລວມ ໝາກຜົນຂອງການກວດກາປະເມີນ ຕາມດຳລັດ 285/ນຍ

## I. ຂໍ້ມູນສັງລວມ :

ການກວດກາ ແລະ ປະເມີນຄັ້ງນີ້ໄດ້ກວມເອົາ **1.053.349 ຄອບຄົວ 8.654 ບ້ານ, 1.100 ກຸ່ມບ້ານ ຢູ່ 143 ເມືອງ, 17** ແຂວງທົ່ວປະເທດ ແລະ ປະເມີນໄດ້ວ່າ:

**1.1.ດ້ານການພັດທະນາ**

- ມີຄອບຄົວພັດທະນາ **498.493 ຄອບຄົວ**
- ມີບ້ານພັດທະນາ **900 ບ້ານ**
- ມີກຸ່ມບ້ານພັດທະນາ **11 ກຸ່ມ**

**1.2.ດ້ານຄວາມທຸກຍາກ**

- ມີຄອບຄົວທຸກຍາກ **199.758 ຄອບຄົວ**
- ມີບ້ານທຸກຍາກ **3.216ບ້ານ**
- ເມືອງທີ່ຈັດວ່າທຸກຍາກ (ຕາມ 285/ນຍ) **ມີ 54 ເມືອງ (ມີລາຍຊື່ເມືອງຄັດຕິດມາພ້ອມນີ້)**

## II. ຂໍ້ມູນຕາມຂະແໜງການ ແຍກຕາມເງື່ອນໄຂ:

### 2.1. ບ້ານທີ່ບັນລຸການພັດທະນາຕາມຂະແໜງການ (ມາດຕາ 8) ແຍກຕາມ13 ເງື່ອນໄຂ:

1. ລະບົບການຈັດຕັ້ງບ້ານໜັກແໜ້ນ ແລະ ເຂັ້ມແຂງ ( ມີໜ່ວຍພັກແຂງ ຮູ້ນຳພາຮອບດ້ານ): **3.485 ບ້ານ ເທົ່າ 40.27%**
2. ປະຊາຊົນພາຍໃນບ້ານມີຄວາມຕື່ນຕົວທາງດ້ານການເມືອງສູງ, ມີສະຕິເຄົາລົບ ແລະ ປະຕິບັດລະບຽບ, ກົດໝາຍບ້ານເມືອງຢ່າງເຂັ້ມງວດ ແລະ ມີຄວາມສາມັກຄີຮັກແພງ ຊ່ວຍເຫຼືອຊຶ່ງກັນ ແລະ ກັນຢ່າງແໜ້ນແຟ້ນ: **7.687 ບ້ານ ເທົ່າ 88.83%**
3. ເປັນບ້ານປອດຄະດີ, ປອດຢາເສບຕິດ ແລະເປັນແບບຢ່າງດ້ານປ້ອງກັນຊາດ-ປ້ອງກັນຄວາມສະຫງົບດີ: **4.242 ບ້ານ ເທົ່າ 49.02%**
4. ຈຳນວນຄອບຄົວພັດທະນາ ກວມຫຼາຍກວ່າ 85% ຂອງຈຳນວນຄອບຄົວທັງໝົດຢູ່ພາຍໃນບ້ານ: **1.922 ບ້ານ ເທົ່າ 22.21%**
5. ມີສະຫະກອນ ຫຼື ກຸ່ມການຜະລິດສິນຄ້າ ແລະ ບໍລິການ, ຄັງສະສົມ ຫຼື ກອງທຶນຂອງບ້ານ: **4.541 ບ້ານ ເທົ່າ 52.47%**

6. ມີການຈັດສັນພູມລຳເນົາຄົງທີ່ ແລະ
   ບ່ອນທຳມາຫາກິນຖາວອນໃຫ້ປະຊາຊົນ: 6.925 ບ້ານ ເທົ່າ 80.02%
7. ມີແຜນຜັງບ້ານທີ່ດີ ແລະມີການຈັດຕັ້ງປະຕິບັດຕາມແຜນຜັງ: 4.641 ບ້ານ ເທົ່າ 53.63%
8. ມີເສັ້ນທາງຄົມມະນາຄົມເຂົ້າເຖິງບ້ານ ທຽວໄດ້ຕະຫຼອດປີ: 6.543 ບ້ານ ເທົ່າ 75.61%
9. ມີຄອບຄົວໄດ້ຊົມໃຊ້ໄຟຟ້າ( ຕາຄ່າຍ) ຫຼາຍກວ່າ 70%
   ຂອງຈຳນວນຄອບຄົວທັງໝົດ: 4.690 ບ້ານ ເທົ່າ 54.19%
10. ໄດ້ປະກາດເປັນບ້ານສາທາລະນະສຸກແບບຢ່າງ: 2.095 ບ້ານ ເທົ່າ 24.21%
11. ໄດ້ປະກາດເປັນບ້ານສຳເລັດການສຶກສາພາກບັງຄັບ
   (ຈົບຊັ້ນປະຖົມ): 6.908ບ້ານ ເທົ່າ 79.82 %
12. ໄດ້ປະກາດເປັນບ້ານວັດທະນະທຳ: 1.617 ບ້ານ ເທົ່າ 18.69%
13. ມີຫ້ອງການ-ສະໂມສອນ, ເດີ່ນກິລາ ແລະ ສິ່ງເອື້ອອຳນວຍ
   ຄວາມສະດວກອື່ນໆ ຮັບໃຊ້ກິດຈະກຳລວມຂອງບ້ານ: 4.481ບ້ານ ເທົ່າ 51.78%

**2.2. ກຸ່ມບ້ານທີ່ບັນລຸການພັດທະນາຕາມຂະແໜງການ ແຍກຕາມ 9 ເງື່ອນໄຂ:**

1. ມີບ້ານພັດທະນາ ຫຼາຍກວ່າ 85%
   ຂອງຈຳນວນບ້ານທັງໝົດພາຍໃນກຸ່ມບ້ານ: 11 ກຸ່ມບ້ານ ເທົ່າ 1.00 %
2. ມີຄວາມເປັນລະບຽບຮຽບຮ້ອຍ, ມີຄວາມສະຫງົບໜັກແໜ້ນ: 975 ກຸ່ມບ້ານ ເທົ່າ 88.64 %
3. ມີແຜນຜັງກຸ່ມບ້ານທີ່ດີ ມີການຈັດຕັ້ງປະຕິບັດຕາມແຜນຜັງ: 598 ກຸ່ມບ້ານ ເທົ່າ 54.36 %
4. ມີຕະຫຼາດຖາວອນ ທີ່ມີການຊື້ຂາຍປະຈຳ: 365 ກຸ່ມບ້ານ ເທົ່າ 33.18 %
5. ມີລະບົບໄປສະນີ ຫຼື ລະບົບໂທລະຄົມມະນາຄົມ: 758 ກຸ່ມບ້ານ ເທົ່າ 68.91 %
6. ມີສູນບໍລິການເຕັກນິກກະສິກຳ ແລະ ປ່າໄມ້: 268 ກຸ່ມບ້ານ ເທົ່າ 24.36%
7. ມີສຸກສາລາ: 838 ກຸ່ມບ້ານ ເທົ່າ 76.18%
8. ມີໂຮງຮຽນມັດທະຍົມສຶກສາ: 832 ກຸ່ມບ້ານ ເທົ່າ 75.64%
9. ມີຫ້ອງການ , ສະໂມສອນ ຫຼື ຫໍວັດທະນະທຳ
   ແລະ ສິ່ງອຳນວຍຄວາມສະດວກ: 627 ກຸ່ມບ້ານ ເທົ່າ 57.00 %

**2.3. ບ້ານທີ່ຈັດວ່າທຸກຍາກ ຕາມມາດຕາ: 5, ແຍກຕາມ 5 ເງື່ອນໄຂດັ່ງນີ້:**

1. ທຸກຍ້ອນວ່າມີຄົວເຮືອນທຸກຍາກກວມ51%ຂຶ້ນໄປ
   ຂອງຈຳນວນຄົວເຮືອນທັງໝົດພາຍໃນບ້ານ: 2.274 ບ້ານ ເທົ່າ 26.28%
2. ທຸກຍ້ອນວ່າບໍ່ມີໂຮງຮຽນປະຖົມ ຫຼື ຖ້າໄປຮຽນຢູ່ໂຮງຮຽນ

ທີ່ຢູ່ໃກ້ທີ່ສຸດຕ້ອງໃຊ້ເວລາຍ່າງ ຫຼາຍກວ່າ 1 ຊົ່ວໂມງ: 152 ບ້ານ ເທົ່າ 1.76 %

3. ທຸກຍ້ອນວ່າບໍ່ມີຖົງຢາປະຈຳບ້ານ, ຮ້ານຂາຍຢາ ຫຼືຖ້າຈະໄປຫາສຸກສາລາຫຼືໂຮງໝໍເມືອງທີ່ໃກ້ທີ່ສຸດ ຕ້ອງ ໃຊ້ເວລາຍ່າງ ຫຼາຍກວ່າ 2 ຊົ່ວໂມງ: 481 ບ້ານ ເທົ່າ 5.56%
4. ທຸກຍ້ອນວ່າບໍ່ມີນ້ຳສະອາດຊົມໃຊ້: 993 ບ້ານ ເທົ່າ 11.47%
5. ທຸກຍ້ອນວ່າບໍ່ມີເສັ້ນທາງຄົມມະນາຄົມ ຫຼືມີແຕ່ທຽວໄດ້ລະດູດຽວ: 2.111 ບ້ານ ເທົ່າ 11.47%

## III. ປະເມີນຄວາມຕ້ອງການລວມ ໃນການສ້າງບ້ານແລະກຸ່ມບ້ານພັດທະນາ ຕາມດຳລັດ 285/ນຍ ໃນທົ່ວປະເທດ

ອີງຕາມຜົນຂອງການກວດກາປະເມີນດັ່ງຂ້າງເທິງ, ຄວາມຕ້ອງການໃນການສ້າງບ້ານ ແລະ ກຸ່ມບ້ານພັດທະນາໃນທົ່ວປະເທດ ແມ່ນປະເມີນໄດ້ດັ່ງນີ້:

### 3.1 ຄວາມຕ້ອງການໃນການສ້າງໃຫ້ບ້ານກາຍເປັນບ້ານພັດທະນາ

ຢາກໃຫ້ 8.654 ບ້ານໃນທົ່ວປະເທດກາຍເປັນບ້ານພັດທະນາ ຕາມ 4ເນື້ອໃນ 4ຄາດໝາຍ, ກໍ່ຄືລຶບລ້າງຄວາມທຸກຍາກໃນທົ່ວປະເທດ ພວກເຮົາຈະຕ້ອງສຸມໃສ່ບາງຂົງເຂດຕົ້ນດັ່ງນີ້:

**1. ເອົາໃຈໃສ່ສຶກສາອົບຮົມປະຊາຊົນຢູ່ 967 ບ້ານ ມີຄວາມຕື່ນຕົວດ້ານການເມືອງ-ມີຄວາມສາມັກຄີສູງ,**

**2. ສ້າງບ້ານປອດຄະດີ, ປອດຢາເສບຕິດ ແລະປກສ, ປກຊດ ໃຫ້ໄດ້ຕື່ມອີກ 4.412 ບ້ານ.**

**3.. ຍັງຕ້ອງໄດ້ເອົາໃຈໃສ່ປັບປຸງອຳນາດການປົກຄອງກໍ່ຄືສ້າງໜ່ວຍພັກແຂງຮູ້ນຳພາຮອບດ້ານຢູ່ 5.169ບ້ານຕື່ມອີກ,**

**4. ດ້ານເສດຖະກິດ, ສັງຄົມ, ວັດທະນະທຳ ແມ່ນ ກ່ອນອື່ນໝົດຕ້ອງໄດ້ຮີບຮ້ອນເອົາໃຈໃສ່ຈັດສັນພູມລຳເນົາຄົງທີ່ແລະບ່ອນທຳມາຫາກິນຖາວອນ ໃຫ້ປະຊາຊົນ ທີ່ດຳລົງຊີວິດຢູ່ 1.729 ບ້ານ, ສ້າງໃຫ້ 199.758 ຄອບຄົວ ທີ່ຍັງຈັດວ່າທຸກຍາກໃຫ້ມີລາຍຮັບທີ່ໝັ້ນຄົງແລະສູງຂຶ້ນ, ສ້າງສະຫະກອນ ຫຼື ກຸ່ມການຜະລິດສິນຄ້າ, ກອງທຶນບ້ານ ຢູ່ 4.113ບ້ານຕື່ມອີກ, ສ້າງບ້ານສາທາລະນະສຸກແບບຢ່າງ ໃຫ້ໄດ້ຕື່ມ 6.559 ບ້ານ, ສ້າງບ້ານສຳເລັດການສຶກສາພາກບັງຄັບ ໃຫ້ໄດ້ຕື່ມ 1.746 ບ້ານ, ສ້າງບ້ານວັດທະນະທຳ ໃຫ້ໄດ້ຕື່ມ 7.037 ບ້ານ**

**ດ້ານການກໍ່ສ້າງພື້ນຖານໂຄງລ່າງ ຍັງຕ້ອງໄດ້ສ້າງໂຮງຮຽນປະຖົມ ໃຫ້ໄດ້ຕື່ມ 152 ຫຼັງ, ສະໜອງຖົງຢາປະຈຳບ້ານ ໃຫ້ໄດ້ 481 ບ້ານ, ສະໜອງນ້ຳສະອາດ ໃຫ້ໄດ້ຕື່ມ 993 ບ້ານ, ສ້າງ**

**ແລະປັບປຸງເສັ້ນທາງເຂົ້າຫາ 2.111 ບ້ານ. ເອົາໃຈໃສ່ໃຫ້ປະຊາຊົນ ໄດ້ຊົມໃຊ້ໄຟຟ້າ (ຕາຂ່າຍ) 3.964 ບ້ານ, ສ້າງແຜນຜັງບ້ານທີ່ດີ ໃຫ້ 4.013 ບ້ານ, ສ້າງແລະປັບປຸງເສັ້ນທາງທຽວໄດ້ຕະຫຼອດປີເຂົ້າຫາ 2.111 ບ້ານ ແລະ ສ້າງ ຫ້ອງການ, ສິ່ງເອື້ອອຳນວຍຄວາມສະດວກສ່ວນລວມຢູ່ 4.177 ບ້ານ ຕື່ມອີກ.**

### 3.2. ຄວາມຕ້ອງການ ໃນການສ້າງໃຫ້ກຸ່ມບ້ານກາຍເປັນກຸ່ມບ້ານພັດທະນາ

ຢາກສ້າງໃຫ້ ທັງໝົດ 1.100 ກຸ່ມບ້ານ ທີ່ມີຢູ່ໃນປະຈຸບັນນີ້ກາຍເປັນ ກຸ່ມບ້ານພັດທະນາ ຕາມ 4ເນື້ອໃນ 4ຄາດໝາຍ, ສ້າງບ້ານໃຫຍ່ໃຫ້ກາຍເປັນຕົວເມືອງນ້ອຍໃນຊົນນະບົດ, ພວກເຮົາຍັງຈະຕ້ອງໄດ້ເອົາໃຈໃສ່ບັນດາຂົງເຂດດັ່ງນີ້:

**ສ້າງໃຫ້ 125 ກຸ່ມບ້ານ ມີຄວາມເປັນລະບຽບຮຽບຮ້ອຍ, ມີຄວາມສະຫງົບໜັກແໜ້ນຂຶ້ນຕື່ມ; ສ້າງໃຫ້ 502 ກຸ່ມບ້ານມີແຜນຜັງກຸ່ມບ້ານທີ່ດີ ແລະມີການຈັດຕັ້ງປະຕິບັດຕາມແຜນຜັງ; ສ້າງຕະຫຼາດຖາວອນ ທີ່ມີການຊື້ຂາຍປະຈຳໃຫ້ 735 ກຸ່ມບ້ານ; ສ້າງລະບົບໄປສະນີ ຫຼື ລະບົບໂທລະຄົມມະນາຄົມ ໃຫ້ 342 ກຸ່ມບ້ານ; ສ້າງ ສູນບໍລິການເຕັກນິກກະສິກຳ ແລະ ປ່າໄມ້ໃຫ້ 832 ກຸ່ມບ້ານ; ສ້າງສຸກສາລາໃຫ້ 262 ກຸ່ມບ້ານ; ສ້າງໂຮງຮຽນມັດທະຍົມສຶກສາໃຫ້ 268 ກຸ່ມບ້ານ; ສ້າງຫ້ອງການ , ສະໂມສອນ ຫຼື ຫໍວັດທະນະທຳ ແລະສິ່ງອຳນວຍຄວາມສະດວກໃຫ້ 473 ກຸ່ມບ້ານ.**

## IV. ຂໍ້ມູນຕາມແຂວງ

ອີງໃສ່ຜົນຂອງການກວດກາປະເມີນຂອງບັນດາແຂວງ,ຄວາມຄືບໜ້າໃນການສ້າງບ້ານແລະກຸ່ມບ້ານພັດທະນາ ຕາມ 4 ເນື້ອໃນ 4 ຄາດໝາຍ ຕາມແຂວງແມ່ນສັງລວມໄດ້ວ່າ ແຂວງທີ່ມີອັດຕາສ່ວນຄອບຄົວພັດທະນາ,ບ້ານພັດທະນາແລະກຸ່ມບ້ານພັດທະນາຫຼາຍກ່ວາໝູ່ ແລະມີອັດຕາຄວາມທຸກຍາກຕ່ຳກວ່າໝູ່ແມ່ນ : ນະຄອນຫຼວງ, ໄຊຍະບູລີ, ບໍລິຄຳໄຊ ແລະຈຳປາສັກ. ສ່ວນແຂວງທີ່ມີລະດັບການສ້າງບ້ານແລະກຸ່ມບ້ານພັດທະນາຕ່ຳກວ່າໝູ່ ແລະມີອັດຕາຄວາມທຸກຍາກສູງ ກວ່າໝູ່ແມ່ນບັນດາແຂວງ ຜົ້ງສາລີ , ຫົວພັນ, ຫຼວງນ້ຳທາ , ອຸດົມໄຊ ແລະ ແຂວງເຊກອງ.

### 4.1. ຄອບຄົວພັດທະນາຕາມແຂວງ:

ແຂວງທີ່ມີ ອັດຕາສ່ວນ ຄອບຄົວພັດທະນາ ຫຼາຍກ່ວາໝູ່ :

| | | |
|---|---|---|
| ອັນດັບ (1) | ນະຄອນຫຼວງວຽງຈັນ | 86.09% = 115.970 ຄອບຄົວ |
| (2) | ໄຊຍະບູລີ | 65.86% = 45.745 ຄອບຄົວ |
| (3) | ວຽງຈັນ | 64.12% = 51.910 ຄອບຄົວ |
| (4) | ບໍລິຄຳໄຊ | 60.65% = 26.656 ຄອບຄົວ |
| (5) | ຫຼວງພະບາງ | 60.28% = 44.239 ຄອບຄົວ. |

ມີອັດຕາສ່ວນຄອບຄົວພັດທະນາໜ້ອຍກວ່າໝູ່ແມ່ນ ແຂວງ ຜົ້ງສາລີ(1.277ຄອບຄົວ=4.10%); ອຸດົມໄຊ(5.120 ຄອບຄົວ = 9.79%); ຄຳມ່ວນ(9.378ຄອບຄົວ = 13.45%); ຫົວພັນ(6.633 ຄອບຄົວ = 14.55%) ບັນດາແຂວງທີ່ເຫຼືອນັ້ນແມ່ນມີຄອບຄົວພັດທະນາກາຍ 20% ຂຶ້ນເມືອໝົດ.

**4.2. ບ້ານພັດທະນາ ຕາມແຂວງ:**

ແຂວງທີ່ມີ ອັດຕາສ່ວນ ບ້ານພັດທະນາ ຫຼາຍກ່ວາໝູ່:

ອັນດັບ (1) ໄຊຍະບູລີ ມີ 37.89% (169 ບ້ານ) (2) ບໍລິຄຳໄຊ ມີ 35.60% (115 ບ້ານ)

(3) ນະຄອນຫຼວງ ມີ 29.39% (144 ບ້ານ) (4) ຈຳປາສັກ ມີ 19.75 % (127 ບ້ານ)

(5) ຫຼວງພະບາງ ມີ 14.16 % (111 ບ້ານ)

ແຂວງທີ່ມີອັດຕາສ່ວນບ້ານພັດທະນາ ໜ້ອຍກວ່າໝູ່ແມ່ນແຂວງຫຼວງນ້ຳທາ(5ບ້ານ) ເຊກອງ (7ບ້ານ ) ; ຫົວພັນ (8 ບ້ານ) ; ອຸດົມໄຊ (12 ບ້ານ) ; ຊຽງຂວາງ (13ບ້ານ).

**4.3.ກຸ່ມບ້ານພັດທະນາ ຕາມແຂວງ:**

ມີອັດຕາສ່ວນ ກຸ່ມບ້ານພັດທະນາ ຫຼາຍກວ່າໝູ່ແມ່ນ ນະຄອນຫຼວງວຽງຈັນ ມີ 5 ກຸ່ມບ້ານ = 8.47 % ; ບໍລິຄຳໄຊ 2 ກຸ່ມບ້ານ = 5,56% ; ແຂວງໄຊຍະບູລີ 3 ກຸ່ມບ້ານ = 6.67% ; ແຂວງ ຫຼວງພະບາງ 1 ກຸ່ມບ້ານ. ແຂວງທີ່ເຫຼືອແມ່ນບໍ່ມີກຸ່ມບ້ານພັດທະນາເລີຍ.

**4.4.ຄອບຄົວທຸກຍາກຕາມແຂວງ:** ແຂວງທີ່ມີ ອັດຕາສ່ວນ ຄອບຄົວທຸກຍາກ ຫຼາຍກ່ວາໝູ່ :

(1) ຜົ້ງສາລີ 54.89% = 17.081 ຄອບຄົວ, (2) ຫົວພັນ 49.94% = 22.757 ຄອບຄົວ

(3) ອັດຕະປື 48.63 %= 11.418 ຄອບຄົວ, (4) ອຸດົມໄຊ 48.58 %= 25.410 ຄອບຄົວ

(5) ເຊກອງ 34.07% = 5.625 ຄອບຄົວ (6) ຫຼວງນ້ຳທາ 31.67 %= 9.156 ຄອບຄົວ

ເວົ້າເປັນຈຳນວນ ແລ້ວແຂວງອຸດົມໄຊ ແລະແຂວງຫົວພັນ ມີຄອບຄົວທຸກຫຼາຍກວ່າໝູ່ ( 20.000 ກວ່າຄອບຄົວ) ແຂວງທີ່ມີຄອບຄົວທຸກໜ້ອຍກວ່າໝູ່ແມ່ນ ນະຄອນຫຼວງ 0.20 = 268 ຄອບຄົວ, ຄຳມ່ວນ 6.7% = 4.667 ຄອບຄົວ, ໄຊຍະບູລີ 6.77% 4.702 ຄອບຄົວ , ແລະ ຈຳປາສັກ 9.93% = 10.960 ຄອບຄົວ( ແຂວງຈຳປາສັກເຖິງວ່າມີອັດຕາສ່ວນຕ່ຳແຕ່ມີຈຳນວນຄອບຄົວທຸກຫຼາຍ).

**4.5. ບ້ານທຸກຍາກ ຕາມແຂວງ:** ແຂວງທີ່ ມີ ອັດຕາສ່ວນ ບ້ານທຸກຍາກ ຫຼາຍກ່ວາໝູ່ :

ອັນດັບ (1) ຜົ້ງສາລີ 80.00% = 432 ບ້ານ (2) ຫົວພັນ 72.22% = 520 ບ້ານ

(3) ອຸດົມໄຊ 70.49% = 332 ບ້ານ (4) ອັດຕະປື 67.33% = 101 ບ້ານ

(5) ເຊກອງ 59.83% = 137 ບ້ານ (6) ຫຼວງນ້ຳທາ 48.31 % = 171 ບ້ານ

ນະຄອນຫຼວງວຽງຈັນ ບໍ່ມີບ້ານທຸກຍາກ, ໄຊຍະບູລີ ມີພຽງ 42 ບ້ານ = 9.42%, ແຂວງຄໍາມ່ວນ 76 ບ້ານ = 12.93% , ຈໍາປາສັກ 91ບ້ານ =14.15%; ວຽງຈັນ 119=23.56% ແລະແຂວງບໍລິຄໍາໄຊ 88 ບ້ານ 27.24% ສ່ວນເຫຼືອນັ້ນແມ່ນມີບ້ານທຸກຍາກກວມ 30% ຂຶ້ນເມືອ.

**V. ເມືອງທຸກຍາກ:**

ອີງຕາມມາດຕາ 6 ຂອງດໍາລັດ 285/ນຍ ທີ່ຈັດໃຫ້ເມືອງທີ່ມີອັດຕາສ່ວນບ້ານທີ່ທຸກຍາກກວມ 51% ຂຶ້ນເມືອ ເປັນເມືອງທຸກຍາກນັ້ນ, ຄະນະພັກ ແລະອໍານາດການປົກຄອງເມືອງ-ແຂວງ-ຢັ້ງຢືນ ແລະ ນໍາສະເໜີວ່າ ໃຫ້ 89 ເມືອງເປັນ ເມືອງພົ້ນທຸກ, ໃນນັ້ນ 13 ເມືອງເຄີຍນອນໃນບັນຊີ 72 ເມືອງ ທຸກຍາກໃນເມື່ອກ່ອນ. ສ່ວນ 54 ເມືອງທີ່ຈັດວ່າທຸກຍາກໃນນັ້ນ ມີ 3 ເມືອງຕັ້ງໃໝ່ ( ເມືອງໄຊສະຖານ, ເມືອງໂພນທອງ, ເມືອງໄຊຈໍາພອນ) ແລະ ມີ 7 ເມືອງທີ່ບໍ່ໄດ້ນອນໃນ 72ເມືອງທຸກຍາກໃນເມື່ອກ່ອນ (ເບິ່ງຄໍາອະທິບາຍ ຂໍ້ VII ລຸ່ມນີ້).

- ມີ 2 ແຂວງຄື : ຜົ້ງສາລີ ແລະ ອຸດົມໄຊ ມີເມືອງທຸກ 100%, ແຂວງຫົວພັນມີ ເມືອງທຸກກວມ 87.50%. ນະຄອນຫຼວງ ແລະ ແຂວງຈໍາປາສັກ ບໍ່ມີເມືອງທຸກ. (ລະອຽດເບິ່ງເອກະສານຊ້ອນທ້າຍ II)

**VI.ຈຸດສຸມບຸກທະລຸ ຂອງລັດຖະບານ:**

ກ່ຽວກັບ 64 ຈຸດສຸມບຸກທະລຸຂອງລັດຖະບານ, ເຫັນວ່າ

- 53 ກຸ່ມບ້ານ (ກວມ 82.81%) ຖືກຢັ້ງຢືນວ່າມີຄວາມເປັນລະບຽບຮຽບຮ້ອຍແລະສະຫງົບສຸກ.
  - 31 ກຸ່ມບ້ານ (ກວມ 48.43%) ມີແຜນຜັງທີ່ດີ.
  - 15 ກຸ່ມບ້ານ ( ກວມ 23.43%) ມີຕະຫຼາດຖາວອນ.
  - 27 ກຸ່ມບ້ານ ( 42.18 %) ມີລະບົບໄປສະນີ ແລະໂທລະຄົມມະນາຄົມ.
  - 16 ກຸ່ມບ້ານ ( 25 %) ມີສູນສົ່ງເສີມກະສິກໍາ
  - 50 ກຸ່ມບ້ານ ( 78.12%) ມີສຸກສາລາ
  - 38 ກຸ່ມບານ ( 59.37% ) ມີ ໂຮງຮຽນມັດທະຍົມ
  - 35 ກຸ່ມບ້ານ ( 54.68%) ມີຫ້ອງການ, ສະໂມສອນ, ເດີ່ນກິລາ, ຫໍວັດທະນະທໍາ...

ສະແດງວ່າ ເພື່ອບຸກທະລຸໃຫ້ສໍາເລັດໃນ ປີ 2015 ນີ້, ໃນ 64 ຈຸດສຸມ ຍັງຕ້ອງການ ຕະຫຼາດຖາວອນ 49 ແຫ່ງ, ລະບົບໄປສະນີໂທລະຄົມ 37 ແຫ່ງ, ສູນສົ່ງເສີມກະສິກໍາ 48 ແຫ່ງ, ສຸກສາລາ 14 ຫຼັງ, ໂຮງຮຽນມັດທະຍົມ 26 ຫຼັງ, ຫ້ອງການ-ສະໂມສອນກຸ່ມບ້ານ 29 ຫຼັງ ແລະອື່ນໆ.

ເມື່ອໄດ້ຮັບການຮອງຮັບຢ່າງເປັນທາງການແລ້ວ, ຂໍ້ມູນຈຳນວນ-ລາຍຊື່ ຄອບຄົວ ແລະບ້ານທີ່ທຸກຍາກ-ບໍ່ທັນພັດທະນາ ພ້ອມທັງລາຍລະອຽດວ່າຍັງຂາດເຂີນດ້ານໃດແດ່, ແມ່ນຈະມີກຽມພ້ອມເພື່ອສະໜອງໃຫ້ແກ່ບັນດາອົງການຈັດຕັ້ງພາກລັດ, ພາກເອກະຊົນ ແລະອົງການຈັດຕັ້ງສັງຄົມທັງພາຍໃນ ແລະຕ່າງປະເທດທີ່ມີຄວາມສົນໃຈ ເພື່ອນຳໃຊ້ເຂົ້າໃນການສ້າງເປັນແຜນງານ ໂຄງການແຜນການ, ເປັນພື້ນຖານໃຫ້ແກ່ການສຶກສາຫາຂໍ້ມູນລວງເລິກ ກໍ່ຄືການສຶກສາຄົ້ນຄ້ວາຕ່າງໆ ທີ່ຮັບໃຊ້ໃຫ້ການແກ້ໄຂຄວາມທຸກຍາກ, ຍູ້ແຮງວຽກງານສ້າງບ້ານ ໃຫ້ເປັນຫົວໜ່ວຍ ພັດທະນາສ້າງໃຫ້ບ້ານໃຫຍ່ກາຍເປັນຕົວເມືອງນ້ອຍໃນຊົນນະບົດ.

## VII. ຄວາມໝາຍຂອງຕົວເລກຜົນຂອງການກວດກາປະເມີນ

ຜ່ານການກວດກາປະເມີນຕາມດຳລັດ 285/ນຍ, ໃນບາງບໍລິເວນ ສັງເກດເຫັນວ່າອັດຕາສ່ວນຕົວເລກຄວາມທຸກຍາກໄດ້ "ເພີ່ມຂຶ້ນ"ເມື່ອສົມທຽບກັບຜົນຂອງການສຳຫຼວດທີ່ຜ່ານມາ.

ການກວດກາປະເມີນຄວາມທຸກຍາກຕາມ285/ນຍໃນຄັ້ງນີ້ ແມ່ນ **ຄັ້ງທຳອິດ** ທີ່ໄດ້ດຳເນີນໄປເປັນເອກະພາບ (ດ້ານເວລາ, ວິທີວິທະຍາ ແລະມາດຕະຖານ) ໃນທົ່ວປະເທດ. **ການນຳເອົາຜົນການກວດກາ ປະເມີນຄັ້ງນີ້ ມາສົມທຽບໃສ່ກັບຕົວເລກຜົນຂອງສຳຫຼວດ/ກວດກາຄວາມທຸກຍາກຄັ້ງອື່ນໆທີ່ດຳເນີນມາກ່ອນໜ້ານີ້ເພື່ອສຶກສາເບິ່ງທ່າອ່ຽງເພີ່ມຂຶ້ນ-ຫຼຸດລົງນັ້ນ, ມີຄວາມໝາຍທັງທາງດ້ານສະຖິຕິ ແລະດ້ານ ພຶດຕິກຳໜ້ອຍທີ່ສຸດ- ຫຼືບໍ່ມີຄວາມໝາຍເລີຍ.** ຄຳອະທິບາຍມີດັ່ງນີ້:

**1.ເປັນຫຍັງເມື່ອທຽບໃສ່ການກວດກາປະເມີນ ແລະສຳຫຼວດໃນເມື່ອກ່ອນ ຈຶ່ງປະກົດເຫັນຕົວເລກຂອງຄວາມທຸກຍາກເພີ່ມຂຶ້ນໃນບາງບ່ອນ? ປະຊາຊົນຢູ່ບ່ອນນັ້ນທຸກລົງບໍ? ການຊີ້ນຳນຳພາຢູ່ບ່ອນນັ້ນອ່ອນລົງບໍ?**

### 1.1.ເຫດຜົນທາງດ້ານວິທະຍາສາດສະຖິຕິ

ຜ່ານມາ ໄດ້ມີຫຼາຍແຂວງ, ເມືອງມີຄວາມພະຍາຍາມກວດກາປະເມີນຄວາມທຸກຍາກ ໂດຍອີງໃສ່ ດຳລັດ285/ນຍເປັນພື້ນຖານ, ໂດຍສະເພາະແມ່ນເພື່ອສະໜອງຂໍ້ມູນ ໃຫ້ກອງປະຊຸມໃຫຍ່ສາມຂັ້ນຂອງຕົນ. ບັນດາແຂວງ, ເມືອງດັ່ງກ່າວ ໄດ້ເອົາມາດຕະຖານ ແລະເງື່ອນໄຂຄວາມທຸກຍາກ ແລະການພັດທະນາ 285/ນຍ ໄປດັດປັບໃຫ້ເຂົ້າກັບເງື່ອນໄຂຂອງທ້ອງຖິ່ນຂອງຕົນ (ໂດຍສະເພາະແມ່ນນິຍາມຄຳວ່າ "ລາຍຮັບ"). ຜ່ານການເກັບກຳຂໍ້ມູນນຳບັນດາແຂວງ ແລະເມືອງໃນທົ່ວປະເທດເຫັນວ່າ ໃນເວລານັ້ນບໍ່ມີແຂວງໃດ, ເມືອງໃດ ໄດ້ເອົາຕາມມາດຕະຖານ ແລະວິທີວິທະຍາຂອງດຳລັດ 285/ນຍ ໄປປະເມີນ. ນອກຈາກນັ້ນແລ້ວ, ການປະເມີນໃນເວລານັ້ນ ສ່ວນຫຼາຍແມ່ນຢຸດຢູ່ "ຄວາມທຸກຍາກ" ບໍ່ໄດ້ສະຫຼຸບໃຫ້ເຫັນເຖິງ "ບ້ານແລະກຸ່ມບ້ານພັດທະນາ ຕາມ 4 ເນື້ອໃນ 4 ຄາດໝາຍ" ນັ້ນເທື່ອ.

ສ່ວນການກວດກາປະເມີນທົ່ວປະເທດໃນຄັ້ງນີ້, "ມາດຕະຖານຄວາມທຸກຍາກ" ນັ້ນເປັນພຽງ ໜຶ່ງ ໃນ 13 ເງື່ອນໄຂຂອງບ້ານພັດທະນາ - ຄືດັ່ງໄດ້ກ່າວມາແລ້ວວ່າຈຸດປະສົງ ສຸດທ້າຍຂອງ ການ ກວດກາປະເມີນ285/ນຍ ແມ່ນ ສະຫຼຸບໃຫ້ໄດ້ວ່າບ້ານໃດ ແລະກຸ່ມບ້ານໃດ ເປັນບ້ານແລະກຸ່ມບ້ານ ພັດທະນາ, ບໍ່ແມ່ນຢຸດຢູ່ຕົວເລກ ຂອງຄວາມທຸກຍາກ ຊຶ່ງເປັນພຽງແຕ່ດ້ານເສດຖະກິດສັງຄົມເທົ່ານັ້ນ.

ດັ່ງນັ້ນຈະເອົາຕົວເລກຜົນຂອງການກວດກາປະເມີນຂອງແຂວງ, ເມືອງທີ່ດຳເນີນມາໃນເມື່ອກ່ອນ ໂດຍໃຊ້ມາດຕະຖານແບບໜຶ່ງ-ມາສົມທຽບໃສ່ກັບຜົນຂອງການກວດກາປະເມີນທົ່ວປະເທດ ທີ່ມີມາດຕະຖານອີກແບບໜຶ່ງ ດ້ວຍວິທີວິທະຍາອີກແບບໜຶ່ງ ແລ້ວ ຈະສະຫຼຸບວ່າ "ອັດຕາຄວາມທຸກຍາກເພີ່ມຂຶ້ນ-ຫຼຸດລົງ" ນັ້ນຈຶ່ງມີຄວາມໝາຍໜ້ອຍທີ່ສຸດ ບໍ່ວ່າດ້ານສະຖິຕິ ກໍ່ຄືດ້ານພຶດຕິກຳ.

ຜົນຂອງການກວດກາປະເມີນຄັ້ງນີ້ ແມ່ນຖືເປັນ **ຂໍ້ມູນຕົວຕັ້ງ (ຕົວເລກທຳອິດ) (baseline)** ເພື່ອເອົາຜົນການກວດກາປະເມີນໃນປີຕໍ່ໆໄປ(ປີລະຄັ້ງ -ແຕ່ນີ້ຫາ ປີ2015) ຕາມມາດຕະຖານດຽວກັນນີ້ ມາສົມທຽບໃສ່ ຈຶ່ງຈະມີຄວາມໝາຍ. ການເອົາຕົວເລກອື່ນມາເປັນຕົວຕັ້ງ-ແລ້ວເອົາຕົວເລກຄັ້ງນີ້ ໄປສົມທຽບໃສ່ນັ້ນ ບໍ່ສອດຄ່ອງກັບເນື້ອໃນຂອງການກວດກາປະເມີນ 258/ນຍໃນຄັ້ງນີ້ ຊຶ່ງໄດ້ກ່າວໄວ້ແຕ່ຕົ້ນແລ້ວວ່າ ການກວດກາປະເມີນ ມີຈຸດປະສົງເອົາ ***ຜົນຂອງການປະເມີນຄັ້ງນີ້ເປັນຂໍ້ມູນຕົວຕັ້ງ- ບໍ່ແມ່ນເອົາເປັນຂໍ້ມູນສົມທຽບໃສ່ ຂໍ້ມູນຜ່ານມາ ແຕ່ຢ່າງໃດ.***

### 1.2.ເຫດຜົນທາງດ້ານການຍົກມາດຕະຖານຄຸນນະພາບຂອງຊີວິດ

ມາດຕະຖານຄວາມທຸກຍາກ ທີ່ລະບຸໄວ້ໃນດຳລັດ285/ນຍ ແມ່ນສູງກ່ວາມາດຕະຖານຄວາມທຸກຍາກທີ່ແຂວງ, ເມືອງ, ຂະແໜງການໄດ້ໃຊ້ຜ່ານມາ ໂດຍສະເພາະແມ່ນ ການສຳຫຼວດສະຖິຕິຄວາມທຸກຍາກ ກໍ່ຄືການກຳນົດເມືອງທຸກຍາກໃນໄລຍະຜ່ານມາ ແມ່ນເອົາຕາມຄຳສັ່ງເລກທີ 10/ນຍ ລົງວັນທີ 25/6/2001 ທີ່ໄດ້ກຳນົດເອົາມາດຕະຖານຄວາມທຸກຍາກ 85.000 ກີບຕໍ່ຄົນຕໍ່ເດືອນ ຊຶ່ງຕ່ຳກ່ວາມາດຕະຖານຄວາມທຸກຍາກ ຂອງດຳລັດ 285/ນຍ ຊຶ່ງເອົາ 192.000ກີບຕໍ່ຄົນຕໍ່ເດືອນ ເຖິງ 2.5 ເທົ່າ (150%). ດັ່ງນັ້ນ ຜົນການກວດກາປະເມີນ285/ນຍ ຈຶ່ງປະກົດວ່າມີ ຕົວເລກອັດຕາຄວາມທຸກຍາກເພີ່ມຂຶ້ນໃນບາງບໍລິເວນ ເມື່ອສົມທຽບໃສ່ຕົວເລກຜ່ານມາ.

ການສັງເກດເຫັນການເພີ່ມຂຶ້ນນັ້ນໃນບາງບໍລິເວນນັ້ນ **ບໍ່ໄດ້ສະແດງວ່າປະຊາຊົນເຮົາທຸກຍາກລົງກ່ວາເກົ່າ, ມີຄຸນນະພາບຊີວິດຫຼືສະຫັວດດີພາບຕ່ຳກ່ວາເກົ່າແຕ່ຢ່າງໃດ; ແລະກໍ່ບໍ່ໄດ້ສ່ອງແສງໃຫ້ເຫັນວ່າການນຳພາຂອງພັກ, ການຄຸ້ມຄອງຂອງລັດກໍ່ຄືອຳນາດການປົກຄອງ ນັ້ນຂີ້ຮ້າຍລົງແຕ່ປະການໃດ.** ກົງກັນຂ້າມ ຄວາມເປັນຈິງຢັ້ງຢືນວ່າ ຊີວິດການເປັນຢູ່, ຫຼືຄຸນນະພາບຊີວິດ (ສະຫັວດດີພາບ) ຂອງປະຊາຊົນເຮົາ ແມ່ນດີຂຶ້ນລື່ນເກົ່າ ຢ່າງຈະແຈ້ງ, ໜັກແໜ້ນ ແລະຕໍ່ເນື່ອງ, ບໍ່ວ່າຈະສົມທຽບໃສ່ໄລຍະເວລາໃດໃນປະຫວັດສາດກໍ່ຄືໃນຍຸກປະຈຸບັນຂອງຊາດເຮົາ. ບັນຫາດັ່ງ

ກ່າວ ແມ່ນສັງເກດເຫັນໄດ້ງ່າຍໆໃນຊີວິດຕົວຈິງ ແລະສະແດງອອກໃນຕົວເລກຊີ້ບອກ ດ້ານເສດຖະກິດສັງຄົມຕ່າງໆ(GDP...)ແລະໄດ້ມີການຍອມຮັບເປັນຢ່າງດີຈາກວົງສາຄະນາຍາດສາກົນ.

ປະກົດການທີ່ "ຕົວເລກ" ເພີ່ມຂຶ້ນນັ້ນ ບໍ່ໄດ້ແປວ່າ ຄວາມທຸກຍາກ "ຕົວຈິງ" ເພີ່ມຂຶ້ນແຕ່ຢ່າງໃດ. ມັນມີຄວາມໝາຍວ່າ ໄດ້ມີການຍົກລະດັບມາດຕະຖານຊີວິດການເປັນຢູ່ທີ່ສັງຄົມລາວ "ຍອມຮັບ" ນັ້ນໃຫ້ສູງຂຶ້ນ. ລະດັບການກິນຢູ່ ຫຼືສະພາວະດີພາບທີ່ໃນເມື່ອກ່ອນຖືວ່າ "ໄດ້ແລ້ວ" -"ບໍ່ທຸກແລ້ວ" ນັ້ນ, ມາຮອດປະຈຸບັນ, ສັງຄົມປະເທດເຮົາໄດ້ປະຕິເສດ-ບໍ່ຍອມຮັບວ່າລະດັບນັ້ນກໍ່ຖືວ່າ "ພົ້ນທຸກ" ໄດ້ອີກຕໍ່ໄປແລ້ວ. ຍ້ອນລະດັບການຂະຫຍາຍຕົວດ້ານເສດຖະກິດສັງຄົມຂອງປະເທດເຮົາສູງຂຶ້ນ. ພວກເຮົາບໍ່ຄວນຢ້ານກົວວ່າຈະຖືກຕຳນິ, ກົງກັນຂ້າມ ພວກເຮົາຄວນ ມີຄວາມເອກອ້າງທະນົງໃຈຕໍ່ຄວາມກ້າວໜ້າຂອງປະເທດຊາດໄຕ້ການນຳພາຂອງພັກເຮົາ ທີ່ມາດຕະຖານການດຳລົງຊີວິດ-ສະພາວະດີພາບ ທີ່ສັງຄົມລາວຍອມຮັບໄດ້ນັ້ນນັບມື້ນັບສູງຂຶ້ນ.

ເຖິງຢ່າງໃດກໍ່ດີ ຖ້າຈະສົມທຽບ, LECS ໄດ້ປະເມີນຕົວເລກ ອັດຕາຄວາມທຸກຍາກຄົວເຮືອນ ໃນປີ 2009/10 ແມ່ນ 20.4% ຊຶ່ງໄດ້ລະບຸໄວ້ຢູ່ໃນພາກສະຫຼຸບແຜນການ 5 ປີຄັ້ງທີ່ VI (2006-2010). ຜົນຂອງການປະເມີນຕາມ 285/ນຍ ໃນເດືອນມີນາ ປີ 2011 ພົບເຫັນວ່າ ອັດຕາຄວາມທຸກຍາກຂອງ ຄອບຄົວ ແມ່ນ 18.96%.

**2. ເປັນຫຍັງ ມີເມືອງຈຳນວນໜຶ່ງແຕ່ກ່ອນບໍ່ໄດ້ນອນໃນບັນຊີ 72 ເມືອງທຸກຍາກ, ຜ່ານການກວດກາປະເມີນ ຄັ້ງນີ້ ພັດສະເໜີວ່າໃຫ້ເປັນເມືອງທຸກຍາກ? ເມືອງດັ່ງກ່າວນີ້ທຸກລົງບໍ?**

ອີງຕາມມາດຕາ 6 ຂອງດຳລັດ 285/ນຍ ທີ່ຈັດໃຫ້ເມືອງທີ່ມີອັດຕາສ່ວນບ້ານທີ່ທຸກຍາກກວມ 51% ຂຶ້ນເມືອ ເປັນເມືອງທຸກຍາກນັ້ນ, ຄະນະພັກ ແລະອຳນາດການປົກຄອງເມືອງ-ແຂວງ-ຢັ້ງຢືນ ແລະ ນຳສະເໜີວ່າ ໃຫ້ 89 ເມືອງເປັນ ເມືອງພົ້ນທຸກ, ໃນນັ້ນ 15 ເມືອງເຄີຍນອນໃນບັນຊີ 72 ເມືອງທຸກຍາກໃນເມື່ອກ່ອນ. ໃນຈຳນວນ 54 ເມືອງທີ່ທຸກຍາກຕາມດຳລັດ 285/ນຍ ນີ້ ມີ 6 ເມືອງ ບໍ່ໄດ້ນອນໃນບັນຊີ 72 ເມືອງ ຄື ເມືອງຜົ້ງສາລີ, ເມືອງບຸ່ນເໜືອ, ເມືອງບຸ່ນໃຕ້, ເມືອງໄຊ,ເມືອງຫຼາ, ແລະ ເມືອງສະໜາມໄຊ. 6 **ເມືອງດັ່ງກ່າວນີ້ທຸກລົງບໍ?**

ການຈັດຄວາມທຸກຍາກຂັ້ນເມືອງ ຢູ່ປະເທດເຮົາ, ຄັ້ງທຳອິດແມ່ນ ການສຳຫຼວດ LECS III ໃນປີ 2003 ທີ່ກຳນົດເອົາ72ເມືອງທຸກຍາກ ໃນນັ້ນ ມີ47ເມືອງທຸກຍາກທີ່ສຸດ.

ຈະເອົາຈຳນວນ 54 ເມືອງທີ່ພົບເຫັນວ່າເປັນເມືອງທຸກຍາກຕາມດຳລັດ 285/ນຍ ມາສົມທຽບໃສ່ກັບ47 ເມືອງທຸກຍາກທີ່ສຸດ ຫຼື 72 ເມືອງທຸກຍາກທີ່ LECS ໄດ້ກຳນົດໃນ 6-7 ປີກ່ອນນັ້ນ, ແລ້ວສະຫຼຸບ ເອົາວ່າຈຳນວນເມືອງທຸກຍາກເພີ່ມຂຶ້ນຫຼືຫຼຸດລົງນັ້ນແມ່ນບໍ່ມີຄວາມໝາຍ ບໍ່ວ່າທາງດ້ານທິດສະດີກໍ່ຄືທາງດ້ານພຶດຕິກຳ ຍ້ອນທັງ 2 ຕົວເລກນີ້ກຳນົດຂຶ້ນມາດ້ວຍ **ຈຸດປະສົງ, ມາດຕະຖານ, ວິທີການ ແຕກຕ່າງກັນ.**

**ດ້ານຈຸດປະສົງ:**LECS ສຳຫຼວດ ຂໍ້ມູນເສດຖະກິດສັງຄົມ ຕາມວິທະຍາສາດສະຖິຕິ ແລະ ສະຫຼຸບ ຕົວເລກຄວາມທຸກຍາກ.-285/ນຍ ເກັບກຳ ຂໍ້ມູນບ້ານແລະກຸ່ມບ້ານ ພັດທະນາ ຕາມ 4 ເນື້ອໃນ 4 ຄາດໝາຍ ຕາມແບບບໍລິຫານແລະສະຫຼຸບໃຫ້ເຫັນບ້ານພັດທະນາ ຊຶ່ງຄວາມທຸກຍາກ ແມ່ນ ໜຶ່ງໃນບັນດາເງື່ອນໄຂ.

**ດ້ານມາດຕະຖານ:** LECS ໃຊ້ ມາດຕະຖານຄວາມທຸກຍາກ 85.000 ກີບຕໍ່ຄົນຕໍ່ເດືອນ ຕາມລາຄາ ປີ2001 ຕາມຄຳສັ່ງເລກທີ 10/ນຍ ລົງວັນທີ 25/6/2001. ການກວດກາປະເມີນ 285/ນຍ ແມ່ນ ເອົາລາຍຮັບສະເລ່ຍ 192.000 ກີບ ຕໍ່ຄົນຕໍ່ເດືອນ ສູງກ່ວາ ມາດຕະຖານ LECSເຖິງ 2.5 ເທົ່າ (150%).

**ດ້ານວິທີວິທະຍາ:** LECS III ໄດ້ເອົາຂໍ້ມູນສຸ່ມຕົວຢ່າງ ທີ່ປະກອບດ້ວຍ 8,092 ຄົວເຮືອນ ຈາກ 540 ບ້ານຢູ່ທຸກເມືອງໃນທົ່ວປະເທດ ແລະມີຊ່ຽວຊານ ແລະ ນັກວິຊາການເປັນຜູ້ເກັບກຳ ຂໍ້ມູນ ວິໃຈຕາມຫຼັກ**ວິທະຍາສາດ**ສະຖິຕິ. ການກວດກາປະເມີນ 285/ນຍ ໄດ້ເກັບກຳຂໍ້ມູນແບບ ບໍລິຫານນຳ **1.053.349 ຄອບຄົວ, 8.654 ບ້ານ ແລະ1.099 ກຸ່ມບ້ານ ຢູ່ 143 ເມືອງ, 17** ແຂວງທົ່ວປະເທດໂດຍແມ່ນນາຍບ້ານ,ພະນັກງານກໍ່ສ້າງຮາກຖານຖານແລະຂະແໜງການຂອງເມືອງ -ແຂວງ ເປັນຜູ້ດຳເນີນ. ຮາກຖານທ້ອງຖິ່ນເປັນຜູ້ຢັ້ງຢືນຜົນການກວດກາປະເມີນຂຶ້ນມາສະເໜີຕໍ່ຂັ້ນເທິງ.

ຕົວຢ່າງ ເມືອງຜົ້ງສາລີ, ເມືອງບຸ່ນເໜືອ, ເມືອງບຸ່ນໃຕ້, ເມືອງໄຊ, ເມືອງຫຼາ, ແລະເມືອງສະໝາມໄຊ ທີ່ບໍ່ໄດ້ນອນໃນບັນຊີ 72 ເມືອງທຸກຍາກ, ແຕ່ມາບັດນີ້ ຄະນະພັກອຳນາດການປົກຄອງກ່ຽວຂ້ອງໄດ້ຢັ້ງຢືນນຳສະເໜີໃຫ້ເປັນເມືອງທຸກຍາກ ຕາມມາດຕະຖານດຳລັດ 285 ທີ່ກວດກາປະເມີນໃນປີ 2011ນີ້ ນັ້ນ, ຈະເວົ້າວ່າ ໃນໄລຍະ 7-8 ປີຜ່ານມາ, ບັນດາເມືອງເຫຼົ່ານີ້ກັບຄືນມາຕົກທຸກໄດ້ຍາກ, ຊີວິດການເປັນຢູ່ຂອງປະຊາຊົນ, ສິ່ງອຳນວຍຄວາມສະດວກພື້ນຖານໂຄງລ່າງຂອງເມືອງ ຂີ້ຮ້າຍລົງກວ່າເກົ່ານັ້ນ ແມ່ນ ເປັນໄປບໍ່ໄດ້. ກົງກັນຂ້າມ, ຊີວິດການເປັນຢູ່ຂອງປະຊາຊົນໃນບໍລິເວນດັ່ງກ່າວໄດ້ຮັບການປັບປຸງດີຂຶ້ນ, ພື້ນຖານໂຄງລ່າງສະດວກຂຶ້ນກວ່າເກົ່າເມື່ອທຽບໃສ່ປີ 2003-2004 ຊຶ່ງເປັນເວລາທີ່ໄດ້ຈັດວ່າບັນດາເມືອງດັ່ງກ່າວພົ້ນທຸກ-ບໍ່ເອົາເຂົ້າໃນບັນຊີ 72 ເມືອງທຸກຍາກນັ້ນ. ນອກຈາກນັ້ນ ກໍ່ບໍ່ໄດ້ໝາຍຄວາມວ່າການຊີ້ນຳນຳພາ ຂອງຄະນະພັກອຳນາດການປົກຄອງຢູບໍລິເວນດັ່ງກ່າວຂີ້ຮ້າຍລົງ, ປະຊາຊົນມີຄວາມກະຕືລືລົ້ນ, ຄວາມເປັນເຈົ້າການຕື່ນຕົວຫຼຸດລົງກວ່າເກົ່ານັ້ນແຕ່ຢ່າງໃດ. ແຕ່ ຄືດັ່ງໄດ້ກ່າວມາແລ້ວ, ມາດຕະຖານຄວາມທຸກຍາກຂອງດຳລັດ 285/ນຍ ແມ່ນ ສູງກວ່າມາດຕະຖານຂອງຄຳສັ່ງເລກທີ10/ນຍ ປີ 2001 ເຖິງ 2.5 ເທົ່າ, ແລະ ການກວດກາປະເມີນ ກໍ່ໄດ້ເອົາຂໍ້ມູນຕົວຈິງ ຈາກໝົດທຸກຄອບຄົວ, ໝົດທຸກບ້ານ, ໝົດທຸກກຸ່ມບ້ານພາຍໃນເມືອງແລ້ວສະຫຼຸບສັງລວມຂຶ້ນມາ ແຕ່ລະຂັ້ນ, ຖົກຖຽງ ສົນທະນາກັນຢ່າງມີປະຊາທິປະໄຕ ຈຶ່ງພົບເຫັນວ່າບັນດາເມືອງດັ່ງກ່າວນັ້ນ ໄດ້ຈັດວ່າເປັນເມືອງທຸກຍາກ ທັງໆທີ່ວ່າ

ຊີວິດການເປັນຢູ່ຕົວຈິງ ກໍ່ຄືການພັດທະນາຕົວຈິງ ຂອງເມືອງແມ່ນດີຂຶ້ນລື່ນສະໄໝທີ່ຈັດວ່າພົ້ນທຸກ ນັ້ນຢ່າງຈະແຈ້ງ.

ເຖິງຢ່າງໃດກໍ່ດີການກຳນົດເອົາເມືອງທຸກຍາກ ກໍ່ສົມຄວນແກ່ກັນປຶກສາຫາລືນຳກັນໃຫ້ເປັນເອກະພາບ ດ້ວຍເຫດຜົນທີ່ວ່າ ຕາມມາດຕາ 6 ຂອງ ດຳລັດ 285/ນຍແລ້ວ, ຄຳວ່າ "ເມືອງທຸກຍາກ" ນັ້ນ ປະເມີນເອົາຕາມອັດຕາສ່ວນບ້ານທີ່ທຸກຍາກທີ່ມີຢູ່ໃນເມືອງນັ້ນໆ ແລະຢູ່ໃນແຜນການພັດທະນາເສດຖະກິດ ສັງຄົມ 5 ປີ ຄັ້ງທີ່ VII ໄດ້ກຳນົດເອົາຄອບຄົວ, ບ້ານ, ແລະກຸ່ມບ້ານທຸກຍາກ ເປັນເປົ້າໝາຍໃນການແກ້ໄຂຄວາມທຸກຍາກ. ອາດຈະເວົ້າ ພຽງແຕ່ຄອບຄົວທຸກຍາກ, ບ້ານທຸກຍາກ, ຄອບຄົວພັດທະນາ, ບ້ານພັດທະນາ, ກຸ່ມບ້ານພັດທະນາ ແລະ ເມືອງ ພັດທະນາ ເທົ່ານັ້ນ ກໍ່ໄດ້ຄວາມໝາຍແລ້ວ.

**ສັງລວມວ່າ ການສັງເກດເຫັນ ຕົວເລກຄວາມທຸກຍາກ ແລະຈຳນວນເມືອງທຸກຍາກ ເພີ່ມຂຶ້ນນັ້ນ ແມ່ນມາຈາກເຫດຜົນທີ່ວ່າ ການກວດກາປະເມີນ285/ນຍ ໄດ້ໃຊ້ມາດຕະຖານທີ່ສູງກວ່າ, ມີຈຸດປະສົງປະເມີນຮອບດ້ານກວ່າ, ໃຊ້ວິທີວິທະຍາກວມຂອບເຂດກ້ວາງກ່ວາ. ເມື່ອທຽບໃສ່ກັບ LECS ທີ່ລິເລີ່ມກຳນົດ 72 ເມືອງທຸກຍາກ ແລະ ກໍ່ແຕກຕ່າງກັນກັບການສຳຫຼວດສະຖິຕິ ຂອງຂະແໜງການ ກໍ່ຄືການກວດກາປະເມີນຂອງທ້ອງຖິ່ນຕ່າງໆຊຶ່ງ ດຳເນີນມາກ່ອນໜ້ານີ້. ມາດຕະຖານຄວາມທຸກຍາກ ແລະການພັດທະນາຕາມດຳລັດ 285/ນຍ ເປັນການຍົກມາດຕະຖານຄຸນນະພາບການດຳລົງຊີວິດ ຂອງປະຊາຊົນບັນດາເຜົ່າຂຶ້ນຕື່ມອີກກ້າວໜຶ່ງ ໃຫ້ຖືກຕ້ອງກັບສະພາບຄວາມເປັນຈິງ ຂອງການຂະຫຍາຍຕົວ ດ້ານເສດຖະກິດສັງຄົມ ອັນຕໍ່ເນື່ອງ ແລະໜັກແໜ້ນຂອງປະເທດເຮົາ ແລະສອດຄ່ອງກັບຄວາມມຸ່ງມາດປາດຖະໜາອັນແຮງກ້າໃນຄວາມສົມບູນພູນສຸກ ຂອງປະຊາຊົນບັນດາເຜົ່າ ພາຍໃຕ້ການນຳພາຂອງພັກເຮົາ.**

ເອກະສານຊ້ອນທ້າຍ II

# ເມືອງທຸກຍາກ ຕາມດຳລັດ 285/ນຍ:

**ຜ່ານການກວດກາປະເມີນ ຕາມດຳລັດ 285/ນຍ ຄະນະພັກ ແລະ ອຳນາດການປົກຄອງເມືອງ-ແຂວງ ຢັ້ງຢືນ ແລະ ນຳສະເໜີ ໃຫ້ 54 ເມືອງເປັນເມືອງທຸກຍາກ:**

1. **ແຂວງຜົ້ງສາລີ ມີ 7 ເມືອງ. ທັງໝົດແມ່ນເມືອງທຸກຍາກ**

   (1) ຜົ້ງສາລີ (2) ໃໝ່ (3) ຂວາ (4) ສຳພັນ (5) ຍອດອູ (6) ບຸ່ນເໜືອ (7) ບຸ່ນໃຕ້

2. **ແຂວງອຸດົມໄຊ ມີ 7 ເມືອງ. ທັງໝົດແມ່ນເມືອງທຸກຍາກ**

   (1) ໄຊ (2) ຫຼາ (3) ນາໝໍ້ (4) ງາ (5) ແບ່ງ (6) ຮຸນ (7) ປາກແບ່ງ

3. **ແຂວງຫຼວງນ້ຳທາມີ 5 ເມືອງ. ໃນນັ້ນເມືອງທຸກຍາກ 3 ເມືອງ:**

   (1) ລອງ (2) ວຽງພູຄາ (3) ນາແລ

4. **ແຂວງບໍ່ແກ້ວມີ 5 ເມືອງ, ໃນນັ້ນເມືອງທຸກຍາກ 3 ເມືອງ:**

   (1) ປາກທາ (2) ຜາອຸດົມ (3) ເມິງ

5. **ແຂວງຊຽງຂວາງມີ 8 ເມືອງ, ໃນນັ້ນເມືອງທຸກຍາກ 2 ເມືອງ:**

   (1) ໜອງແຮດ (2) ທ່າໂທມ

6. **ແຂວງຫົວພັນມີ 8 ເມືອງ, ໃນນັ້ນມີເມືອງທຸກຍາກ 7 ເມືອງ:**

   (1) ຊຳໃຕ້ (2) ວຽງທອງ (3) ວຽງໄຊ (4) ຊຽງຄໍ້ (5) ຊຳເໜືອ (6) ແອດ (7) ຫົວເມືອງ

7. **ແຂວງຫຼວງພະບາງມີ 12 ເມືອງ ໃນນັ້ນມີເມືອງທຸກຍາກ 4 ເມືອງ:**

   (1) ໂພນໄຊ (2) ປາກແຊງ, (3) ເມືອງ ວຽງຄຳ (4) ເມືອງ ໂພນທອງ

8. **ແຂວງໄຊຍະບູລີ ມີ 11 ເມືອງ ໃນນັ້ນມີເມືອງທຸກຍາກ 1 ເມືອງ:**

   (1) ໄຊສະຖານ

9. **ແຂວງວຽງຈັນ ມີ 13 ເມືອງ ໃນນັ້ນມີເມືອງທຸກຍາກ 2 ເມືອງ:**

   (1) ໄຊສົມບູນ (2) ຮົ່ມ

10. **ນະຄອນຫຼວງວຽງຈັນ ມີ 9 ເມືອງ .** ບໍ່ມີເມືອງທຸກຍາກ

11. **ແຂວງບໍລິຄຳໄຊ ມີ 7 ເມືອງ ໃນນັ້ນມີເມືອງທຸກຍາກ 2 ເມືອງ:**

    ( 1) ວຽງທອງ (2) ໄຊຈຳພອນ

12. **ແຂວງຄຳມ່ວນມີ 9 ເມືອງ ໃນນັ້ນມີເມືອງທຸກຍາກ 1 ເມືອງ:**

    (1) ບົວລະພາ

13. **ແຂວງສະຫວັນນະເຂດ ມີ 15 ເມືອງ ໃນນັ້ນມີເມືອງທຸກຍາກ 7 ເມືອງ:**

    (1) ພີນ (2) ອາດສະພອນ (3) ນອງ (4) ເຊໂປນ (5) ພະລານໄຊ (6) ຊົນບູລີ (7) ວິລະບູລີ

14. **ແຂວງຈຳປາສັກມີ 10 ເມືອງ .** ບໍ່ມີເມືອງທຸກຍາກ

15. **ແຂວງສາລະວັນມີ 6 ເມືອງໃນນັ້ນມີເມືອທຸກຍາກ 3 ເມືອງ:**

(1) ຕຸ້ມລານ (2) ຕະໂອ້ຍ (3) ສະໝ້ວຍ

16. **ແຂວງເຊກອງ ມີ 4 ເມືອງ ໃນນັ້ນມີເມືອງທຸກຍາກ 2 ເມືອງ**

(1) ກະລຶມ (2)ດາກຈຶງ

17. **ແຂວງອັດຕະປື ມີ 5 ເມືອງ ໃນນັ້ນມີ 3 ເມືອງທຸກຍາກ**

(1) ຊານໄຊ (2) ພູວົງ (3) ສະໝາມໄຊ